HONGSA POWER

**<u>ຂອບເຂດຂອງງານ ( Terms of reference: TOR )</u>**

**<u>Security Service for Hongsa Site</u>**

1. **<u>ຄວາມເປັນມາ</u>**

ບໍລິສັດ ໄຟຟ້າຫົງສາ ຈໍາກັດ ຖືກສ້າງຕັ້ງຂຶ້ນໃນປີ 2009 ໂດຍ ບໍລິສັດ ບ້ານປູ ພາວເວີ ຈໍາກັດ (BPP), ບໍລິສັດ ຜະລິດໄຟຟ້າ ລາດຊະບູລີ ໂຮນດິ້ງຈໍາກັດ (RATCH), ແລະ ລັດວິສາຫະກິດຖືຮຸ້ນລາວ (LHSE) ພັດທະນາ ແລະ ດໍາເນີນງານການກໍ່ສ້າງໂຮງໄຟຟ້າປາກບໍ່ຖ່ານຫີນ ທີ່ມີກໍາລັງການຜະລິດກະແສໄຟຟ້າໄດ້ 1.878 MW ໂດຍທົ່ວໄປເອີ້ນວ່າ "ໂຮງໄຟຟ້າພະລັງງານຄວາມຮ້ອນຫົງສາ". ໂຮງໄຟຟ້າພະລັງງານຄວາມຮ້ອນຫົງສາ ເປັນໂຮງໄຟຟ້າທີ່ມີກາລັງການຜະລິດກະແສໄຟຟ້າໄດ້ສູງສຸດຂອງ ສປປ ລາວ ເພື່ອສະໜອງພະລັງງານໄຟຟ້າໃຫ້ແກ່ສອງປະເທດ ລາວ ແລະ ໄທ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ຕັ້ງຢູ່ທີ່ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ.

2. **<u>ວັດຖຸປະສົງ</u>**

ບໍລິສັດ ໄຟຟ້າຫົງສາ ຈໍາກັດ ມີຈຸດປະສົງເພື່ອຈັດຈ້າງເໝົາ ບໍລິການ ຮັກສາຄວາມປອດໄພ ທີ່ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ.

<u>ໄລຍະເວລາການຈ້າງ 3 ປີ ເລີ່ມຕັ້ງແຕ່ ວັນທີ່ 1 ເມສາ 2024 – 31 ມີນາ 2027</u>

3. **<u>ຄຸນສົມບັດຜູ້ສະເໜີລາຄາ</u>**

3.1 ຜູ້ສະເໜີລາຄາຕ້ອງເປັນນິຕິບຸກຄົນຜູ້ທີ່ມີວັດຖຸປະສົງໃນການໃຫ້ບໍລິການ ຫຼື ບໍລິຫານວຽກງານຮັກສາຄວາມປອດໄພ ຕາມໜັງສືຮັບຮອງນິຕິບຸກຄົນ ຫຼື ໃບທະບຽນວິສາຫະກິດ ຕາມກົດໝາຍ ແລະ ໄດ້ຮັບການອະນຸຍາດສ້າງຕັ້ງ ບໍລິສັດຮັກສາຄວາມປອດໄພ ແລະ ໜ່ວຍບໍລິການຄວາມປອດໄພ ຈາກກອງບັນຊາການ ປກສ ແຂວງ ໄຊຍະບູລີ ສປປ ລາວ.

3.2 ມີປະສົບການໃນການໃຫ້ບໍລິການ ຮັກສາຄວາມປອດໄພ ບໍ່ນ້ອຍກວ່າ ໓ ປີ.

3.3 ມີທຶນຈົດທະບຽນ ບໍ່ນ້ອຍກວ່າ 600,000,000 ກີບ (ຫົກຮ້ອຍລ້ານກີບ).

3.4 ຜູ້ສະເໜີລາຄາຕ້ອງບໍ່ແມ່ນພະນັກງານ ຫຼື ມີຄວາມສໍາພັນຕາມກົດໝາຍກັບພະນັກງານຂອງ ບໍລິສັດ ໄຟຟ້າຫົງສາ ຈໍາກັດ.

3.5 ຜູ້ສະເໜີລາຄາຕ້ອງບໍ່ເປັນຜູ້ມີຜົນປະໂຫຍດຮ່ວມກັນກັບຜູ້ສະເໜີລາຄາລາຍອື່ນ ຫຼື ບໍ່ເປັນຜູ້ກະທໍາການອັນເປັນການຂັດຂວາງການແຂ່ງຂັນປະກວດລາຄາປະມູນໃນຄັ້ງນີ້.

3.6 ຜູ້ສະເໜີລາຄາ ຕ້ອງມາຮັບຟັງເງື່ອນໄຂຂອບເຂດຂອງງານ (Terms of Reference: TOR) ໃນວັນທີ່ **<u>09 ກຸມພາ 2024</u>**. ທີ່ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ສໍານັກງານໂພນຈັນ ເວລາ ໙ ໂມງ ເປັນຕົ້ນໄປ.

3.7 ຜູ້ສະເໜີລາຄາ ຫຼື ຕົວແທນ ຜູ້ສະເໜີລາຄາລາຍໃດ ບໍ່ເຂົ້າຮັບຟັງການຊີ້ແຈງ ແລະ ເບິ່ງສະຖານທີ່ ຕາມຂໍ້ ໓.໖ ຈະບໍ່ມີສິດໃນການຢື່ນຊອງປະມູນ.

3.8 ຜູ້ສະເໜີລາຄາຕ້ອງບໍ່ມີປະຫວັດ ຫຼື ເປັນຜູ້ເຮັດຜິດສັນຍາກັບ ບໍລິສັດ ໄຟຟ້າຫົງສາ ຈໍາກັດ.

**4. ການສະເໜີລາຄາ**

ຜູ້ສະເໜີລາຄາ ຕ້ອງຍື່ນຊອງປະມູນຈຳນວນ 2 ຊອງ ຄື: ຊອງທາງດ້ານເທັກນິກ 1 ຊອງ ແລະ ຊອງລາຄາ 1 ຊອງ

4.1 ຊອງເທັກນິກປະກອບດ້ວຍ

a. ລາຍລະອຽດ ແລະ ປະຫວັດການທຳງານຂອງບໍລິສັດ (Company Profile) ແລະ ໃຫ້ຄັດຕິດເອກະສານອ້າງອີງທີ່ຄືກັນ ຫຼື ຄ້າຍຄືກັບງານປະມູນນີ້ 3 ປີ ຍ້ອນຫຼັງ **(ຕ້ອງມີ).**

b. ໜັງສືຮັບຮອງນິຕິບຸກຄົນ ຫຼື ໃບທະບຽນວິສາຫະກິດ ແລະ ວັດຖຸປະສົງການດຳເນີນກິດຈະການ **(ຕ້ອງມີ).**

c. ໃບຢັ້ງຢືນການຈົດທະບຽນອາກອນ ຫຼື ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ ຫຼື ໃບຢັ້ງຢືນການມອບພັນທະອາກອນ **(ຕ້ອງມີ).**

d. ໃບຢັ້ງຢືນການມອບອຳນາດ **(ຖ້າມີ).**

e. ແຜນຜັງບຸກຄາລາກອນ ແລະ ຜັງການບໍລິຫານ ແລະ ຜັງການຕິດຕໍ່ປະສານງານທັງໝົດ ພ້ອມ CV ຂອງ ລະດັບຫົວຫນ້າງານຂຶ້ນໄປ ສຳຫຼັບງານປະມູນຄັ້ງນີ້ **(ຕ້ອງມີ).**

f. ປະຫວັດການເຮັດວຽກຂອງພະນັກງານຮັກສາຄວາມປອດໄພລະດັບຫົວໜ້າງານຊຸດ ແລະ ຜູ້ຊ່ວຍຫົວໜ້າຊຸດ ພ້ອມທັງຫຼັກຖານການເຝິກອົບຮົມ ເຈົ້າໜ້າທີ່ຄວາມປອດໄພໃນການເຮັດວຽກ ລະດັບຫົວໜ້າງານ **(ຕ້ອງມີ).**

g. ແຜນການຝຶກອົບຮົມພະນັກງານຮັກສາຄວາມປອດໄພ ເພື່ອໃຫ້ຕະໜັກເຖິງຄວາມປອດໄພ ແລະ ແຜນການຝຶກອົບຮົມທີ່ກ່ຽວຂ້ອງກັບການປະຕິບັດວຽກກ່ອນເລີ່ມວຽກ ຕາມຂໍ້ 7.6 ແລະ 7.7 **(ຕ້ອງມີ).**

h. ແຜນການກວດສຸຂະພາບປະຈຳປີພ້ອມລາຍລະອຽດ **(ຕ້ອງມີ).**

i. ຫຼັກຖານດ້ານການເງິນ (Bank statement) ຍ້ອນຫຼັງຈາກວັນທີ່ສະເໜີລາຄາ 1 ປີ ຫຼື ໜັງສືສະໜັບສະໜູນທາງດ້ານການເງິນຈາກທະນາຄານທຸລະກິດ **(ຖ້າມີ).**

j. ເອກະສານ Certification ISO 9001, ISO 14001 , ISO 45001 ຂອງຜູ້ສະເໜີລາຄາ.

k. ນະໂຍບາຍ ຫຼື ເຕັກໂນໂລຢີ ທີ່ເປັນມິດກັບສິ່ງແວດລ້ອມ ຂອງຜູ້ສະເໜີລາຄາ **(ຖ້າມີ).**

l. ແຜນການຕອບໂຕ້ເຫດສຸກເສີນ ຂອງຜູ້ສະເໜີລາຄາ **(ຖ້າມີ).**

4.2 ຊອງລາຄາ ປະກອບດ້ວຍ ໃບສະເໜີລາຄາ ພ້ອມລາຍລະອຽດ ດັ່ງນີ້:

a. ໃບສະເໜີລາຄາຕາມ Annex 1 : BOQ ງານຈ້າງເໝົາ ບໍລິການ ຮັກສາຄວາມປອດໄພ ບໍລິສັດ ໄຟຟ້າຫົງສາ ຈຳກັດ ແຂວງ ໄຊຍະບູລີ ສປປ.ລາວ.

b. ລາຄາທີ່ສະເໜີຕ້ອງເປັນສະກຸນເງິນບາດ (THB)ໃຫ້ຜູ້ສະເໜີລາຄາສົ່ງໃບແຈ້ງໜີ້ເປັນສະກຸນເງິນບາດແລະບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະຊຳລະເງິນໃຫ້ທ່ານເປັນສະກຸນເງິນກີບເທົ່ານັ້ນ

ໂດຍໃຊ້ອັດຕາແລກປ່ຽນທຸກໆວັນທີ 1 ຂອງເດືອນທີ່ໃຫ້ບໍລິການ ໂດຍໃຊ້ອັດຕາແລກປ່ຽນທີ່ປະກາດໂດຍທະນາຄານການຄ້າຕ່າງປະເທດ (BCEL) (ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ ສພຊ, ລົງວັນທີ 7 ກໍລະກົດ 2022).

c. ເງິນຄ່າຈ້າງທີ່ສະເໜີ ຫຼື ເຮັດສັນຍາ ບໍ່ລວມຄ່າການເຮັດວຽກເພີ່ມໂມງ ຫຼື ຄ່າລ່ວງເວລາ (OT) ພະນັກງານຮັກສາຄວາມປອດໄພ.

4.1 ຜູ້ສະເໜີລາຄາຕ້ອງເຮັດສຳເນົາຂໍ້ສະເໜີຕ່າງໆ ໃສ່ໃນ USB ແລະສ່ໃນຊອງປະມູນແຕ່ລະຊອງຕື່ມຈາກເອກສານຕົ້ນສະບັບຂອງທາງດ້ານເຕັກນິກ ແລະ ຊອງລາຄາໃນກໍລະນີເອກສານຕົ້ນສະບັບບໍ່ກົງກັນ ກັບເອກສານສຳເນົາ ໃຫ້ຍຶດຖືເອກສານຕົ້ນສະບັບເປັນຫລັກ.

4.2 ກຳນົດຢືນລາຄາ 120 ວັນ ນັບຈາກວັນທີ່ຍື່ນຊອງປະມູນ.

4.3 ຜູ້ສະເໜີລາຄາຈະຕ້ອງຍື່ນປະມູນ ໂດຍປິດຊອງ ແລະ ຈ່າໜ້າຊອງ ແລະ ສົ່ງ ເອກະສານມາທີ່ສະຖານທີ່ດັ່ງນີ້ ພາຍໃນ ວັນທີ່ **28 ກຸມພາ 2024**:

Ms. Phannipa Kiatbumrung (ຜູ້ຈັດການຝ່າຍຈັດຊື້)

**Address 1:** ບໍລິສັດ ໄຟຟ້າຫົງສາ ຈຳກັດ

ອາຄານ NNN ຊັ້ນ 4 ຫ້ອງເບີ 5 ຖະໜົນ ບູລິຈັນ ບ້ານໂພນສີນວນ ເມືອງສີສັດຕະນາກ ແຂວງ ນະຄອນຫຼວງວຽງຈັນ ສປປ ລາວ

**Address 2:** ບໍລິສັດ ໄຟຟ້າຫົງສາ ຈຳກັດ

ຫ້ອງການໂພນຈັນ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ

Telephone Number: +856-20-52441802
Tel: +856(0)74266121-4 EXT. 1117
E-mail address: phannipa_k@hongsapower.com

**5. ເກນການພິຈາລະນາຄັດເລືອກ**

ຄະນະກຳມະການຈັດຊື້ ຈັດຈ້າງ ຈະເປີດຊອງຂໍ້ສະເໜີ ແລະ ພິຈາລະນາຂໍ້ສະເໜີທາງດ້ານເຕັກນິກ ແລະ ລາຄາດັ່ງນີ້:

5.1 ຖ້າຜູ້ສະເໜີລາຄາຄົນໃດມີຄຸນສົມບັດບໍ່ຖືກຕ້ອງ ຕາມຂໍ້ 3 ຫຼື ຍື່ນເອກສານການສະເໜີລາຄາບໍ່ຖືກຕ້ອງ ຫຼື ບໍ່ຄົບ ຕາມຂໍ້ 4 ຄະນະກຳມະການຈັດຊື້ ຈັດຈ້າງຈະບໍ່ພິຈາລະນາຂໍ້ສະເໜີຂອງ ຜູ້ສະເໜີລາຄາຄົນນັ້ນ ຍົກເວັ້ນມີຂໍ້ຜິດພາດນ້ອຍຫນຶ່ງ ຫຼື ບໍ່ແມ່ນສາລະສຳຄັນ.

5.2 ໃນການຕັດສິນການປະມູນ ຫຼື ໃນການເຮັດສັນຍາ ຄະນະກຳມະການຈັດຊື້ ຈັດຈ້າງ ມີສິດໃຫ້ ຜູ້ສະເໜີລາຄາ ອະທິບາຍ ຫຼື ຊີ້ແຈງ ຕາມຄວາມຈິງ ສະພາບ ສະຖານະ ຫຼື ຄວາມຈິງອື່ນ ໆ ທີ່ກ່ຽວຂ້ອງກັບຜູ້ສະເໜີລາຄາໄດ້ ບໍລິສັດ ໄຟຟ້າຫົງສາ ຈຳກັດ ຈະບໍ່ຮັບລາຄາ ຫຼື ບໍ່ເຮັດສັນຍາ ຫາກຫລັກຖານດັ່ງກ່າວບໍ່ເໝາະສົມ ຫຼື ບໍ່ພຽງພໍ ຫຼື ບໍ່ຖືກຕ້ອງ.

5.3 ບໍລິສັດ ໄຟຟ້າຫົງສາ ຈຳກັດ ຂໍສະຫງວນສິດບໍ່ຮັບພິຈາລະນາລາຄານ້ອຍທີ່ສຸດ ຫຼື ຍົກເລີກການປະມູນ ຫຼື ບໍ່ຮັບພິຈາລະນາຈັດຈ້າງ ອີງຕາມການພິຈາລະນາຂອງຄະນະກຳມະການຈັດຊື້ ຈັດຈ້າງ ໂດຍພິຈາລະນາຈາກຜົນປະໂຫຍດ ຂອງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ເປັນຫລັກ ແລະ ຖືວ່າການຕັດສິນໃຈຂອງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ເປັນເດັດຂາດ ຜູ້ສະເໜີລາຄາບໍ່ມີສິດຮ້ອງຂໍຄ່າເສຍຫາຍກັບ ບໍລິສັດ ໄຟຟ້າຫົງສາ ຈຳກັດ.

**6. ເງື່ອນໄຂ ແລະ ລາຍລະອຽດການປະຕິບັດວຽກງານ**

6.1 **ຄຸນສົມບັດຂອງເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາ**

a. ເພດຊາຍ ຈຳນວນ 88 ຄົນ (ກະທີ່ 1 ຈຳນວນ 43 ຄົນ ແລະ ກະທີ່ 2 ຈຳນວນ 45 ຄົນ) ສັນຊາດລາວ ມີທີ່ຢູ່ຕາມທະບຽນບ້ານທີ່ໄດ້ຮັບການຢັ້ງຢືນຈາກນາຍບ້ານ ອາຍຸບໍ່ຕໍ່າກວ່າ 20 ປີ ແຕ່ບໍ່ເກີນ 55 ປີ ຈົບການສຶກສາລະດັບ ປໍ 5 ຂຶ້ນໄປ ແລະ ສາມາດອ່ານອອກ ແລະ ຂຽນໄດ້ ເພື່ອປະຕິບັດງານເປັນພະນັກງານຮັກສາຄວາມປອດໄພ.

b. ເພດຊາຍ ຈຳນວນ 4 ຄົນ (ກະທີ່ 1 ຈຳນວນ 2 ຄົນ ແລະ ກະທີ່ 2 ຈຳນວນ 2 ຄົນ) ສັນຊາດລາວ ທີ່ມີຢູ່ຕາມທະບຽນບ້ານທີ່ໄດ້ການຢັ້ງຢືນຈາກນາຍບ້ານ ອາຍຸບໍ່ຕໍ່າກວ່າ 35 ປີ ແຕ່ບໍ່ເກີນ 55 ປີຈົບການສຶກສາ ຊັ້ນສູງຂຶ້ນໄປ ທີ່ມີປະສົບການດ້ານຄວາມປອດໄພ ແລະ ຮັກສາຄວາມປອດໄພ ຢ່າງນ້ອຍ 2 ປີ ແລະ ສາມາດອ່ານອອກ ແລະ ຂຽນໄດ້ ເພື່ອເຂົ້າປະຕິບັດເປັນສາຍກວດພະນັກງານຮັກສາຄວາມປອດໄພ.

c. ເພດຊາຍ ຈຳນວນ 6 ຄົນ (ກະທີ່ 1 ຈຳນວນ 3 ຄົນ ແລະ ກະທີ່ 2 ຈຳນວນ 3 ຄົນ) ສັນຊາດລາວທີ່ມີຢູ່ຕາມທະບຽນບ້ານທີ່ໄດ້ການຢັ້ງຢືນຈາກນາຍບ້ານ ອາຍຸບໍ່ຕໍ່າກວ່າ 35 ປີ ແຕ່ບໍ່ເກີນ 55 ປີ (ຈົບການສຶກສາລະດັບ ມໍ 7 ຂຶ້ນໄປ ແລະ ສາມາດອ່ານອອກ ແລະ ຂຽນໄດ້ ເພື່ອເຂົ້າປະຕິບັດງານເປັນຜູ້ຊ່ວຍສາຍກວດພະນັກງານຮັກສາຄວາມປອດໄພ.

d. ມີຄວາມປະພຶດຮຽບຮ້ອຍ ບໍ່ຕິດຢາ ຫຼື ສານເສບຕິດ (ໂດຍຜູ້ວ່າຈ້າງຈະກວດສອບກ່ອນເຂົ້າປະຕິບັດງານ ແລະສຸ່ມກວດລະຫວ່າງປະຕິບັດງານ) ຫຼື ສິ່ງມຶນເມົາ, ບໍ່ຫຼິ້ນການພະນັນ.

e. ບໍ່ເປັນຄົນໄຮ້ຄວາມສາມາດ, ຄົນເປັນບ້າ ຫຼື ເສຍຈິດ.

f. ມີຮ່າງກາຍແຂງແຮງສົມບູນ ພ້ອມທີ່ຈະປະຕິບັດງານໄດ້ຕະຫຼອດເວລາໂດຍຜ່ານການປະເມີນສະພາບ ຮ່າງກາຍຈາກຜູ້ວ່າຈ້າງ ແລະ ຕ້ອງບໍ່ເປັນໂລກຕ້ອງຫ້າມຕາມລະບຽບຂອງລັດຖະບານ ຫຼື ໂລກປະຈຳຕົວ ສາຍຕາຕ້ອງບໍ່ສັ້ນ ຫຼື ຍາວເກີນໄປ ການໄດ້ຍິນຢູ່ໃນເກນປົກກະຕິ ແລະ ຈະຕ້ອງບໍ່ເປັນໂລກຜິດສຸລາ (ຕິດເຫຼົ້າ).

g. ບໍ່ເຄີຍຖືກລົງໂທດໄລ່ອອກ ປົດອອກ ຫຼື ໃຫ້ອອກເພາະການກະທຳຄວາມຜິດຮ້າຍແຮງທີ່ໃດມາກ່ອນ ຫຼື ບໍ່ເຄີຍຕ້ອງໂທດຈຳຄຸກ ເວັ້ນແຕ່ເຮັດຜິດ ຫຼື ຄວາມຜິດທີ່ໄດ້ເຮັດໂດຍການປະໝາດ ມີຫຼັກຖານຢືນຢັນວ່າໄດ້ຜ່ານການກວດສອບປະຫວັດຈາກສຳນັກງານປ້ອງກັນຄວາມສະຫງົບ.

h. ເປັນຜູ້ມີຄວາມປະພຶດດີ ແລະ ມີສິນທຳອັນດີບໍ່ຂັດຕໍ່ຄວາມບໍ່ສະຫງົບຮຽບຮ້ອຍຄວາມໝັ້ນຄົງ ຂອງປະເທດ ຫຼື ມີພຶດຕິກຳທີ່ໜ້າສົງໄສວ່າພົວພັນກ່ຽວຂ້ອງກັບການກະທຳຜິດກົດໝາຍ ຫຼື ມີອິດທິພົນສ້າງຄວາມເດືອດຮ້ອນແກ່ປະຊາຊົນ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສັງຄົມສ່ວນລວມ.

**6.2 ການຈັດຫາເຈົ້າໜ້າທີ່ຮັກສາຄວາມປອດໄພ ແລະ ຫຼັກເກນການປະຕິບັດງານ**

6.2.1 ຜູ້ສະເໜີລາຄາຕ້ອງຈັດຫາເຈົ້າໜ້າທີ່ຮັກສາຄວາມປອດໄພຕາມຂໍ້ 1 ຈຳນວນ 98 ຄົນມາປະຕິບັດງານ ວັນຈັນ ເຖິງ ວັນອາທິດ ວັນລະ 2 ກະ ກະລະ 12 ຊົ່ວໂມງ ໂດຍແຕ່ລະກະປະຕິບັດດັ່ງລຸ່ມນີ້:

a. ກະທີ່ 1 ຕັ້ງແຕ່ເວລາ 07.00 - 19.00 ໂມງ ປະກອບດ້ວຍສາຍກວດ ຈຳນວນ 2 ຄົນ ຜູ້ຊ່ວຍສາຍກວດ ຈຳນວນ 3 ຄົນ ພະນັກງານຮັກສາຄວາມປອດໄພ ຈຳນວນ 43 ຄົນ ລວມເປັນ 48 ຄົນ.

b. ກະທີ່ 2 ຕັ້ງແຕ່ເວລາ 19.00 - 07.00 ໂມງ ຂອງມື້ຕໍ່ໄປ ປະກອບ ດ້ວຍເຈົ້າໜ້າທີ່ຮັກສາຄວາມປອດໄພລະດັບຫົວໜ້າຊຸດ 2 ຄົນ ເຈົ້າໜ້າທີ່ຮັກສາຄວາມປອດໄພລະດັບຜູ້ຊ່ວຍຫົວໜ້າຊຸດ 3 ຄົນ ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາລະດັບປະຕິບັດການ ຈຳນວນ 45 ຄົນ ລວມເປັນ 50 ຄົນ.

c. ພະນັກງານກະທີ່ 1 ແລະ ກະທີ່ 2 ຈະຕ້ອງເຂົ້າຮັບການປະຊຸມ ແລະ ກວດສອບກ່ອນເລີ່ມງານ ໃນແຕ່ລະກະຕາມທີ່ຜູ້ວ່າຈ້າງໄດ້ກຳນົດໄວ້.

d. ເມື່ອເຈົ້າໜ້າທີ່ຮັກສາຄວາມປອດໄພປະຕິບັດງານເຂົ້າກະຄົບ 7 ວັນ ຜູ້ສະເໜີລາຄາຈະຕ້ອງຈັດໃຫ້ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາສະຫຼັບປ່ຽນກະ ຈາກກະກາງເວັນ

(ກະທີ່ 1) ເປັນກະກາງຄືນ (ກະທີ່ 2) ແລະ ກະກາງຄືນ (ກະທີ່ 2) ເປັນກະກາງເວັນ (ກະທີ່ 1).

e. ພະນັກງານຂອງຜູ້ສະເໜີລາຄາປະຕິບັດງານຕິດຕໍ່ກັນໄດ້ບໍ່ເກີນ 18 ຊົ່ວໂມງຕໍ່ວັນ ຍົກເວັ້ນຊ່ວງສະຫຼັບກະ ປ່ຽນກະຈາກກາງເວັນ (ກະທີ່ 1) ເປັນກະກາງຄືນ (ກະທີ່ 2) ແລະ ກະກາງຄືນ(ກະທີ່ 2) ເປັນກະກາງເວັນ(ກະທີ່ 1).

(ຕາມກົດໝາຍ ວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ, ວັນທີ 24 ທັນວາ 2013 ມາດຕາ 51, 54 ຕາມຂອບເຂດຂອງງານ ( Terms of reference: TOR ) ເປັນອາຊີບທີ່ມີການກຳນົດເວລາເຮັດວຽກສະເພາະ ແລະ ມີຄວາມຈຳເປັນຕ້ອເຮັດວຽກເພີ່ມໂມງເກີນກວ່າ 45 ຊົ່ວໂມງຕໍ່ເດືອນ ດັ່ງນັ້ນ ຜູ້ສະເໜີລາຄາຕ້ອງຂໍອະນຸຍາດຈາກອົງການຄຸ້ມຄອງແຮງງານ ໂດຍໄດ້ຮັບການເຫັນດີຈາກໜ່ວຍກຳມະບານ ຫຼື ຕ່າງໜ້າຜູ້ອອກແຮງງານ).

6.3 **ສາຍກວດ ແລະ ຜູ້ຊ່ວຍສາຍກວດ** ມີໜ້າທີ່ດັ່ງນີ້:

a. ກວດສອບການປະຕິບັດງານຂອງເຈົ້າໜ້າທີ່ ຮັກສາຄວາມປອດໄພ ປະຈຳຈຸດ ທັງ 2 ກະ ແລະ ພື້ນທີ່ອື່ນທີ່ຜູ້ຈ້າງມອບໝາຍ.

b. ສະຫຼຸບບັນທຶກລາຍງານເຫດການປະຈຳວັນໃນການປະຕິບັດໜ້າທີ່ ຂອງພະນັກງານຮັກສາຄວາມປອດໄພ ທຸກຊົ່ວໂມງ ເພື່ອລາຍງານໃຫ້ຜູ້ວ່າຈ້າງເປັນປະຈຳທຸກວັນ ຖ້າມີປັນຫາຂັດຂ້ອງ ຫຼື ມີເຫດສຸກເສີນ(ພິເສດ) ຕ້ອງລາຍງານໃຫ້ຜູ້ວ່າຈ້າງ ແລະ ຜູ່ກ່ຽວຂ້ອງຮັບຮູ້ທັນທີ.

c. ເຮັດລາຍງານການປະຕິບັດງານຂອງເຈົ້າໜ້າທີ່ຮັກສາຄວາມປອດໄພ ແລະ ຄວາມປົກກະຕິ ຫຼື ຜິດປົກກະຕິ ຕາມຈຸດທີ່ໄດ້ປະຕິບັດງານ ແລະ ຈັດສົ່ງລາຍງານຕໍ່ຜູ້ບໍລິການທຸກວັນຈັນຂອງອາທິດນັ້ນ ໆ.

d. ກວດການປະຕິບັດງານ ຕາມຈຸດຮັບຜິດຊອບຂອງເຈົ້າໜ້າທີ່ຮັກສາຄວາມປອດໄພທັງໝົດວຽກຢ່າງນ້ອຍ 2 ຄັ້ງຕໍ່ກະ.

e. ຄວບຄຸມເບິ່ງແຍງ ໃຫ້ພະນັກງານຮັກສາຄວາມປອດໄພປະຕິບັດງານໃຫ້ເປັນໄປຕາມສັນຍາ ຫຼື ໜ້າທີ່ອື່ນ ໆ ຕາມທີ່ຜູ້ມອບໝາຍໃຫ້ປະຕິບັດງານເພີ່ມເຕີ່ມ.

6.4 **ພະນັກງານຮັກສາຄວາມປອດໄພມີໜ້າທີ່ດັ່ງນີ້:**

a. ກວດການເບິ່ງແຍງບໍລິເວນອາຄານສຳນັກງານ, ບ້ານພັກ, ເຄື່ອງຈັກ, ອຸປະກອນ, ສິ່ງກໍ່ສ້າງ ແລະ ປ້ອງກັນຊັບສິນທີ່ຢູ່ໃນຄວາມຮັບຜິດຊອບຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ. ຊັບສິນຂອງຜູ້ປະຕິບັດວຽກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ຊັບສິນຂອງຜູ້ຮັບເໝົາຊ່ວງຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຢູ່ພື້ນທີ່ມອບໝາຍໃຫ້ເບິ່ງແຍງຮັບຜິດຊອບບໍ່ໃຫ້ສູນຫາຍ, ເສຍຫາຍ, ຖືກລັກລອບ ຫຼື ຖືກທຳລາຍ

b. ກວດສອບບຸກຄົນ, ຍານພາຫະນະ, ສິ່ງຂອງ ແລະ ອື່ນໆ ທີ່ນຳເຂົ້າ-ອອກບໍລິເວນບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ບໍລິເວນອື່ນໆຕາມທີ່ຮັບຜິດຊອບໃຫ້ເປັນໄປຕາມລະບຽບ ແລະ ວິທີການທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ

c. ອຳນວຍຄວາມສະດວກແກ່ຜູ້ມາຕິດຕໍ່ ແລະ ເບິ່ງແຍງໃຫ້ຢູ່ໃນເຂດທີ່ກຳນົດ

d. ຈັດການຈາລະຈອນຍານພາຫະນະໃນບໍລິເວນພື້ນທີ່ປະຕິບັດງານບໍ່ແຮ່ ໂຮງໄຟຟ້າ ສຳນັກງານ ແລະ ບ້ານພັກ ບໍລິສັດ ໄຟຟ້າຫົງສາ ຈຳກັດ  ແລະ ບໍລິເວນອື່ນຕາມທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຮັບຜິດຊອບ ໃຫ້ຖືກຕ້ອງຕາມກົດຈາລະຈອນ ແລະ ລະບຽບປະຕິບັດທີ່ບໍລິສັດ ໄຟຟ້າຫົງສາ ຈຳກັດ ກຳນົດໄວ້.

e. ລະມັດລະວັງປ້ອງກັນການເກີດອັກຄີໄພ ເຮັດໜ້າທີ່ດັບເພີງເບື້ອງຕົ້ນເມື່ອເກີດອັກຄີໄພ.

f. ລະມັດລະວັງປ້ອງກັນການກໍ່ໃຫ້ເກີດການກໍ່ການຮ້າຍ ການສອດແນມ ແລະ ກວດຄົ້ນບຸກຄົນທີ່ມີພຶດຕິກຳໜ້າສົງໄສ.

g. ກວດກາເບິ່ງແຍງບໍ່ໃຫ້ມີການກະທຳຄວາມຜິດກົດໝາຍ ເຊັ່ນ: ມົ່ວສຸມສິ່ງເສບຕິດ ຫຼື ມົ່ວສຸມຫຼິ້ນການພະນັນ.

h. ຍ່າງກວດກາຕາມຈຸດຕ່າງໆ ພາຍໃນ ບໍລິເວນ ໜ່ວຍງານທີ່ຮັບຜິດຊອບທຸກ 1 ຊົ່ວໂມງ ແຈ້ງເຫດຮ້າຍແກ່ຜູ້ປະຕິບັດງານຂອງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ຜູ້ຮັບຜິດຊອບເຈົ້າໜ້າທີ່ສຳນັກງານ ປ້ອງກັນຄວາມສະຫງົບ ແລະ ຜູ້ກ່ຽວຂ້ອງໃນທັນທີ ທີ່ເກີດເຫດ ຫຼື ເມື່ອຮັບຮູ້ເຫດ.

i. ຍຸດຕິກໍລະນີຂັດແຍ້ງ ຫຼື ການຜິດຖຽງກັນທີ່ມີການໃຊ້ກຳລັງ ແລະ ອາວຸດໂດຍດ່ວນ.

j. ປ້ອງກັນ ແລະ ດຳເນີນການຈັບສັດລ້ຽງ ເຊັ່ນ: ງົວ,ຄວາຍ, ໝາ ແລະ ແມວ ຫຼື ອື່ນໆ ທີ່ອາດເປັນອັນຕະລາຍຕໍ່ຮ່າງກາຍ, ຊີວິດ ແລະ ຊັບສິນຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ຜູ້ປະຕິບັດວຽກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໃນພື້ນທີ່ເບິ່ງແຍງຮັບຜິດຊອບ ຫຼື ໄດ້ຮັບມອບໝາຍ ໂດຍ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະເປັນຜູ້ຈັດຫາເຄື່ອງມື ແລະ ອຸປະກອນ

k. ລາຍງານຜົນການປະຕິບັດງານຕໍ່ສາຍກວດ ຜູ້ຊ່ວຍສາຍກວດ ທຸກ ໆ 1 ຊົ່ວໂມງ.

l. ງານອື່ນ ໆ ທີ່ກ່ຽວຂ້ອງກັບງານດ້ານຮັກສາຄວາມປອດໄພທີ່ ຜູ້ຄວບຄຸມງານ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສັ່ງການ.

6.5 ຜູ້ສະເໜີລາຄາຕ້ອງດຳເນີນການ ແລະ ໄດ້ຮັບການອະນຸຍາດໃຫ້ໃຊ້ແຮງງານໃນຈຳນວນຊົ່ວໂມງການເຮັດວຽກຕາມຂໍ້ 6.2.1 ຈາກໜ່ວຍງານຄຸ້ມຄອງແຮງງານ ເມືອງ ຫົງສາ ບໍ່ເກີນ 15 ມື້ ຫຼັງຈາກໄດ້ຮັບພິຈາລະນາເຊັນສັນຍາຈ້າງ

6.6 ຈຸດທີ່ຕ້ອງຮັກສາຄວາມປອດໄພເປັນໄປຕາມທີ່ ບໍລິສັດ ໄຟຟ້າຫົງສາ ກຳນົດ ຕາມຕາຕາລາງ ທີ່ 1,2 ແລະ3.

HONGSA POWER

6.7 ແຜນຜັງສະແດງເຂດຮັກສາຄວາມປອດໄພທີ່ ບໍລິສັດ ໄຟຟ້າຫົງສາ ຈຳກໍາ ກຳນົດນັ້ນ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດປ່ຽນແປງຈຸດຮັກສາການ ແລະ ເວລາການປະຕິບັດງານແກ້ໄຂໄດ້ຕາມທີ່ເຫັນ ສົມຄວນ.

**ຕາຕາລາງທີ່ 1 ພື້ນທີ່ຄວາມຮັບຜິດຊອບ ແລະ ຈຳນວນຂອງ ເຈົ້າໜ້າທີ່ຮັກສາຄວາມປອດໄພ ບໍລິເວນ ພື້ນທີ່ສຳນັກງານ ແລະ ອາຄານບ້ານພັກພະນັກງານ**

| No. | ID | Station | Manpower | | Total |
|---|---|---|---|---|---|
| | | | Day | Night | |
| 1 | C-01 | Main Gate 1 | 3 | 2 | 5 |
| 2 | C-02 | Inlet 8 | 1 | 1 | 2 |
| 3 | C-03 | ສວນກ້າເບ້ຍ | 0 | 1 | 1 |
| 4 | C-04 | ອາຄານຫົງຄຳໄຊຍະຄານ | 1 | 0 | 1 |
| 5 | C-05 | ບ້ານພັກນາໜອງຄຳ | 1 | 1 | 2 |
| 6 | C-06 | ທາງເຂົ້າພູໄຟ | 1 | 1 | 2 |
| 7 | C-07 | ສຳນັກງານໂພນຈັນ | 2 | 2 | 4 |
| 8 | C-08 | ຫຼັງສຳນັກງານໂພນຈັນ | 0 | 1 | 1 |
| 9 | C-09 | ບ້ານພັກໂພນຈັນ Condo 1 | 1 | 1 | 2 |
| 10 | C-10 | ບ້ານພັກໂພນຈັນ Condo 5 | 0 | 1 | 1 |
| 11 | C-11 | ໄມ້ກ້ານທາງເຂົ້າເຂື່ອນນ້ຳແກນ | 2 | 2 | 4 |
| Summary | | | **12** | **13** | **25** |

ຕາຕາລາງທີ່ 2 ພື້ນທີ່ຄວາມຮັບຜິດຊອບ ແລະ ຈຳນວນຂອງ ເຈົ້າໜ້າທີ່ຮັກສາຄວາມປອດໄພ
ບໍລິເວນ ອ້ອມຮອບພື້ນທີ່ໂຮງໄຟຟ້າ

| No. | ID | Station | Manpower | | Total |
|---|---|---|---|---|---|
| | | | Day | Night | |
| 1 | PP-02 | OE | 1 | 1 | 2 |
| 2 | PP-03 | W/H: B | 1 | 1 | 2 |
| 3 | PP-04 | W/H: C | 1 | 1 | 2 |
| 4 | PP-05 | W/H: D | 1 | 1 | 2 |
| Summary | | | 4 | 4 | 8 |

ຕາຕາລາງທີ່ 3 ພື້ນທີ່ຄວາມຮັບຜິດຊອບ ແລະ ຈຳນວນຂອງເຈົ້າໜ້າທີ່ຮັກສາຄວາມປອດໄພ
ບໍລິເວນ ພື້ນທີ່ປະຕິບັດງານບໍ່ແຮ່

| No. | ID | Station | Manpower | | Total |
|---|---|---|---|---|---|
| | | | Day | Night | |
| 1 | MN-01 | Mining Gate 1 | 3 | 2 | 5 |
| 2 | MN-02 | Geo robot monitors (Behind the power plant) | 1 | 1 | 2 |
| 3 | MN-03 | Pumping Yard | 1 | 1 | 2 |
| 4 | MN-04 | Coal line C1.2 Head drive | 1 | 1 | 2 |
| 5 | MN-05 | Coal line C2.2 Head drive | 1 | 1 | 2 |
| 6 | MN-06 | Radar Viewpoint | 1 | 1 | 2 |
| 7 | MN-07 | Westland | 1 | 1 | 2 |
| 8 | MN-08 | Mine Substation | 1 | 1 | 2 |
| 9 | MN-09 | Earth Bund 1 | 1 | 1 | 2 |
| 10 | MN-11 | Earth Bund 2 | 1 | 1 | 2 |

| | | | | | |
|---|---|---|---|---|---|
| 11 | MN-12 | Mine Electrical Workshop & IMM Yard | 1 | 2 | 3 |
| 12 | MN-13 | IMM Yard 1 | 1 | 1 | 2 |
| 13 | MN-14 | Coal stock Yard 2 | 1 | 1 | 2 |
| 14 | MN-15 | CBY1 & CBY2 head drive | 1 | 1 | 2 |
| 15 | MN-16 | Mining CHS Conveyor 2.1 Yard | 0 | 1 | 1 |
| 16 | MN-17 | Coal stockyard 1 | 1 | 1 | 2 |
| 17 | MN-18 | WL2 Yard | 1 | 2 | 3 |
| 18 | MN-19 | Mining Gate 2 | 3 | 2 | 5 |
| 19 | MN-20 | WEP 1 (Three-way site prep and route SPD) | 1 | 1 | 2 |
| 20 | MN-21 | WEP 2 (Limestone crushing plant) | 1 | 1 | 2 |
| 21 | MN-22 | Kewngew 3 (Setting Pond Road) | 2 | 2 | 4 |
| 22 | Spare | Auxiliary Equipment Watcher/Sump pumping | 2 | 2 | 4 |
| Summary | | | 27 | 28 | 55 |

6.8 ຄຸນສົມບັດ (ເພດ) ເຈົ້າໜ້າທີ່ຮັກສາຄວາມປອດໄພຕາມຂໍ້ 6.1 ແລະ ຈໍານວນເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາ ຕັ້ງແຕ່ຕາຕາລາງທີ່ 1 - ຕາຕາລາງທີ່ 3 ອາດຈະມີການປ່ຽນແປງ ໄດ້ຕາມທີ່ບໍລິສັດ ໄຟຟ້າຫົງສາ ຈໍາກັດ ເຫັນສົມຄວນ.

## 7. <u>ເງື່ອນໄຂທົ່ວໄປ</u>

7.1 ຜູ້ສະເໜີລາຄາຕ້ອງສົ່ງລາຍຊື່ພ້ອມຫຼັກຖານຂອງພະນັກງານຮັກສາຄວາມປອດໄພຂອງຜູ້ສະເໜີລາຄາທັງໝົດໃຫ້ ບໍລິສັດ ໄຟຟ້າຫົງສາ ຈໍາກັດ. ພິຈາລະນາກ່ອນການປະຕິບັດງານ ພາຍໃນ 7 ວັນ ຫຼັງຈາກທີ່ມີການ ເຊັນເອກະສານສັນຍາຈ້າງ ໂດຍມີລາຍລະອຽດດັ່ງນີ້:

a. ໃບຢັ້ງຢືນທີ່ຢູ່

b. ສໍາມະໂນຄົວ

c. ສຳເນົາເອກະສານວຸດການສຶກສາ

d. ສຳເນົາປະກັນອຸປະຕິເຫດ ຂອງເຈົ້າໜ້າທີ່ຮັກສາຄວາມປອດໄພ

e. ຜົນການກວດສອບສຸຂະພາບກ່ອນເລີ່ມປະຕິບັດງານຂອງເຈົ້າໜ້າທີ່ຮັກສາຄວາມປອດໄພ ຂອງ ຜູ້ສະເໜີລາຄາ

f. ເອກະສານຢືນຢັນວ່າບໍ່ມີປະຫວັດອາຍາ ຕາມຂໍ້ 6.1 ຂໍ້ g

g. ເອກະສານຜ່ານການເຝິກອົບຮົມ ຕາມຂໍ້ 7.6 ແລະ 7.7

7.2 ຜູ້ສະເໜີລາຄາຕ້ອງກວດສອບສະຖານທີ່ ແລະ ຊັບສິນພາຍໃນຂອບເຂດປະຕິບັດງານ ກ່ອນວັນເຂົ້າປະຕິບັດງານ ຢ່າງນ້ອຍ 3 ວັນ.

7.3 ຜູ້ສະເໜີລາຄາຕ້ອງເຮັດເອກະສານ Site Permit Requestion ສົ່ງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ກ່ອນວັນເຂົ້າປະຕິບັດງານຢ່າງນ້ອຍ 15 ວັນ.

7.4 ຜູ້ວ່າຈ້າງຕ້ອງສະຫງວນສິດ ຫຼື ບໍ່ອະນຸຍາດໃຫ້ຜູ້ສະເໜີລາຄາໂຍກຍ້າຍ ຫຼື ປັບປ່ຽນພະນັກງານຮັກສາຄວາມປອດໄພ ລວມທັງສາຍກວດຕາມຄວາມເໝາະສົມ ໂດຍບໍ່ຜ່ານການແຈ້ງກັບຜູ້ຄວບຄຸມງານ ບໍລິສັດ ໄຟຟ້າຫົງສາ ຈຳກັດ.

7.5 ຜູ້ສະເໜີລາຄາຈະຕ້ອງຈັດຫາພະນັກງານຕິດຕໍ່ປະສານງານ ຈຳນວນ 1 ຄົນ ເພື່ອເຮັດໜ້າທີ່ບັນທຶກເວລາ ໃບແຈ້ງໜີ້ຕະຫຼອດຈົນເອກະສານອື່ນໆ ທີ່ກ່ຽວຂ້ອງ ຫຼື ບໍລິສັດ ຮ້ອງຂໍ ເພື່ອດຳເນີນການສົ່ງເອກະສານໃຫ້ກັບ ບໍລິສັດ ໄຟຟ້າຫົງສາ ຈຳກັດ ແລະ ການຈັດຫາພະນັກງານທົດແທນ ແລະ ຄວາມປະພຶດຂອງພະນັກງານ ພ້ອມດ້ວຍປະສານງານທັງໝົດຂອງທຸກສ່ວນງານ ໂດຍຜູ້ສະເໜີລາຄາຈະຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍເອງ.

7.6 ກໍລະນີພະນັກງານຮັກສາຄວາມປອດໄພ ຂອງບໍລິສັດຜູ້ສະເໜີລາຄາ ຫຼື ຜູ້ໃຫ້ບໍລິການບໍ່ສາມາດມາປະຕິບັດງານ ໄດ້ດ້ວຍກໍລະນີໃດກໍ່ຕາມ ບໍລິສັດຜູ້ສະເໜີລາຄາ ຈະຕ້ອງຈັດຫາພະນັກງານຮັກສາຄວາມປອດໄພມາແທນພະ ນັກງານຮັກສາຄວາມປອດໄພທີ່ບໍ່ສາມາດມາປະຕິບັດງານ ພາຍໃນໄລຍະເວລາ 10:00 ໂມງ ຂອງວັນນັ້ນ ໆ ຫຼື ບໍ່ເກີນ 2 ຊົ່ວໂມງ ຫຼັງຈາກໄດ້ຮັບແຈ້ງຈາກ ບໍລິສັດ ໄຟຟ້າຫົງສາ ຈຳກັດ (ຕາມຄຸນສົມບັດຂໍ້ທີ່ 6.1 ມາທົດແທນ) ພ້ອມທັງຕ້ອງເຂົ້າຮັບການອົບຮົມ ຫຼັກສູດດ້ານຄວາມປອດໄພ ສຸຂະພາບອະນາໄມ ສິ່ງແວດລ້ອມ ແລະ ຮັກສາຄວາມປອດໄພສຳລັບຜູ້ປະຕິບັດງານໃໝ່.

7.7 ຜູ້ສະເໜີລາຄາ ຈະຕ້ອງຈັດໃຫ້ມີການເຝິກອົບຮົມດ້ານຄວາມປອດໄພຂອງພື້ນທີ່ ຫຼື ຫຼັກສູດທີ່ກ່ຽວຂ້ອງ ກັບການປະຕິບັດງານ ເພື່ອໃຫ້ຄຳນຶ່ງເຖິງຄວາມປອດໄພຕະຫຼອດສັນຍາ ໂດຍມີຫົວຂໍ້ການເຝິກອົບຮົມ ຕາມຂໍ້ດັ່ງລຸ່ມນີ້:

a. ຄວາມຮູ້ພື້ນຖານກ່ຽວກັບການພະຍາບານຂັ້ນຕົ້ນ.

b. ຄວາມຮູ້ພື້ນຖານກ່ຽວກັບການໃຊ້ວິທະຍຸ, ເຄື່ອງມືສື່ສານ.

c. ຄວາມຮູ້ພື້ນຖານກ່ຽວກັບການນຳໃຊ້ອາວຸດຂັ້ນຕົ້ນ.

NNN Building 4th Floor/Room No. D5, Boulichan Road, Phonsinouan Village,
Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 - 29
Fax: + 856 74 266120

d. ຄວາມຮູ້ພື້ນຖານກ່ຽວກັບການປ້ອງກັນ ແລະ ການດັບເພີງ ຂັ້ນຕົ້ນ.

e. ຄວາມຮູ້ພື້ນຖານກ່ຽວກັບກົດໝາຍຂັ້ນຕົ້ນ.

f. ຄວາມຮູ້ພື້ນຖານກ່ຽວກັບການຕໍ່ສູ້ປ້ອງກັນຕົວ.

g. ຄວາມຮູ້ທົ່ວໄປກ່ຽວກັບ ກົດຈາລາຈອນ ແລະ ກົດໝາຍອື່ນ ໆ ທີ່ກ່ຽວຂ້ອງ.

h. ການກວດເບິ່ງ ເວນຍາມ ແລະ ການກວດຄົ້ນ.

i. ການປ້ອງກັນແລະຫຼຸດຜ່ອນອຸປະຕິເຫດ ແລະ ແກ້ໄຂ ຫຼື ຮັບມືກັບສະຖານະການສຸກເສີນ.

7.8 ໂດຍຜູ້ສະເໜີລາຄາຈະຕ້ອງນຳສົ່ງແຜນອົບຮົມ ປະຈຳປີໃຫ້ກັບ ບໍລິສັດ ໄຟຟ້າຫົງສາ ຈຳກັດ ພາຍໃນ 30ວັນ ຫຼັງຈາກໄດ້ຮັບການວ່າຈ້າງ ພ້ອມສົ່ງເອກະສານຜົນລາຍງານການອົບຮົມແຕ່ລະຫຼັກສູດ ຕາມຂໍ້ທີ່ 7.7 ພາຍໃນ 7 ວັນ ກ່ອນເລີ່ມສັນຍາ ຫຼື ກ່ອນເຂົ້າມາປະຕິບັດງານ ໂດຍຜູ້ສະເໜີລາຄາຈະຕ້ອງເປັນຜູ້ຮັບຜິດຊອບ ຄ່າໃຊ້ຈ່າຍເອງທັງໝົດ.

7.9 ກໍລະນີເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາທີ່ມາປະຕິບັດງານ ແລະ ບໍ່ສາມາດປະຕິບັດໄດ້ ແລະ ບໍ່ໄດ້ຈັດຫາຜູ້ມາປະຕິບັດງານແທນ ໃຫ້ຜູ້ສະເໜີລາຄາຮັບຜິດຊອບ ຕໍ່ຄວາມເສຍຫາຍ ແລະ ຊັບສິນອື່ນ ໆ ໃນໜ້າທີ່ຮັບຜິດຊອບນັ້ນດ້ວຍ.

7.10 ຜູ້ສະເໜີລາຄາຕ້ອງປະຕິບັດຕໍ່ເຈົ້າໜ້າທີ່ຮັກສາຄວາມປອດໄພ ຂອງຜູ້ສະເໜີລາຄາຕາມສັນຍາທັງໝົດທີ່ກ່ຽວຂ້ອງ ແລະ ບັງຄັບໃຊ້ໃນ ສປປ. ລາວ ໂດຍຜູ້ສະເໜີລາຄາ ຫຼື ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາບໍ່ມີສິດຮຽກຮ້ອງຜົນປະໂຫຍດຕາມກົດໝາຍນັ້ນ ໆ ກັບ ບໍລິສັດ ໄຟຟ້າຫົງສາ ຈຳກັດ ບໍ່ວ່າກໍລະນີໃດໆ.

7.11 ຜູ້ສະເໜີລາຄາ ມີໜ້າທີ່ຮັບຜິດຊອບພາສີ ອາກອນ ແລະ ສະຫວັດດີການ ຕາມກົດໝາຍກຳນົດ ແຫ່ງ ສປປ. ລາວ ແກ່ພະນັກງານໂດຍຜູ້ສະເໜີລາຄາຈະຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍເອງທັງໝົດ.

7.12 ຜູ້ສະເໜີລາຄາຈະຕ້ອງເຮັດປະກັນສັງຄົມໃຫ້ລູກຈ້າງຂອງຕົນທຸກຄົນໂດຍບໍ່ຕ້ອງນຳຕົ້ນສະບັບໃບຈົດທະບຽນ ປະກັນສັງຄົມມາສະແດງ ແລະ ມອບສຳເນົາ 1 ຊຸດໃຫ້ ພາຍໃນ 15 ວັນ ຫຼັງຈາກເລີ່ມສັນຍາ.

7.13 ຜູ້ສະເໜີລາຄາຕ້ອງເຮັດປະກັນອຸປະຕິເຫດແບບປະກັນຊີວິດກຸ່ມ ໃຫ້ລູກຈ້າງຂອງຜູ້ສະເໜີລາຄາທຸກຄົນ ແລະ ມີວົງເງິນຄວາມຄຸ້ມຄອງໃນ ແລະ ເລີ່ມຄຸ້ມຄອງອຸປະຕິເຫດຕັ້ງແຕ່ວັນທີ່ 1 ເມສາ 2024 ເຖິງວັນທີ່ 31 ມີນາ 2027 ໂດຍຕ້ອງນຳຕົ້ນສະບັບເອກສານປະກັນອຸປະຕິເຫດມາສະແດງ ແລະ ມອບສຳເນົາ 1 ຊຸດ ໃຫ້ກັບທາງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ພາຍໃນ 15 ວັນ ກ່ອນເລີ່ມສັນຍາ.

7.14 ຈັດໃຫ້ມີການກວດສຸຂະພາບປະຈຳປີ ປີລະ 2 ຄັ້ງ (ຄັ້ງທີ່ 1 ກ່ອນປະຕິບັດງານ ຄັ້ງທີ່ 2 - 6 ລະຫວ່າງປະຕິບັດງານ) ຕາມກົດໝາຍ ສປປ. ລາວ ໂດຍມີລາຍລະອຽດການກວດສອບສຸຂະພາບ ດັ່ງຕໍ່ໄປນີ້.

a. ສານເສບຕິດ (ກວດນໍ້າຍ່ຽວ).

b. ເອກສະເລປອດ.

c. ກວດຮ່າງກາຍທົ່ວໄປ.

7.15 ບໍລິສັດ ໄຟຟ້າຫົງສາ ຈໍາກັດ ບໍ່ມີສ່ວນກ່ຽວຂ້ອງໃດ ໆ ແລະບໍ່ມີການຮັບຜິດຊອບ ຕໍ່ຄວາມເສຍຫາຍໃດໆ ທີ່ເກີດຂຶ້ນກັບພະນັກງານຮັກສາຄວາມປອດໄພ ຫຼື ຊັບສິນຂອງຜູ້ໃຫ້ບໍລິການ ລວມທັງຄ່າຈ້າງ ຫຼື ຜົນປະ ໂຫຍດຕອບແທນອື່ນໃດ ຂອງພະນັກງານຂັບລົດຂອງບໍລິສັດຜູ້ສະເໜີລາຄາ ຫຼື ຜູ້ໃຫ້ບໍລິການໂດຍຖືວ່າຜູ້ໃຫ້ບໍລິ ການເປັນຜູ້ຮັບຜິດຊອບເອງທັງໝົດ.

7.16 ພະນັກງານທີ່ບໍລິສັດຜູ້ສະເໜີລາຄາ ເປັນຜູ້ດໍາເນີນການຈັດຫາ ຫຼື ຈ້າງມາປະຕິບັດງານໃຫ້ກັບ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ແລະ ຈະຕ້ອງຢູ່ພາຍໃຕ້ການຄວບຄຸມສັ່ງການຂອງບໍບໍລິສັດ ໄຟຟ້າຫົງສາ ຈໍາກັດ ແລະ ເປັນພະນັກ ງານຂອງຜູ້ໃຫ້ບໍລິການແຕ່ຝ່າຍດຽວ ໂດຍຜູ້ສະເໜີລາຄາ ມີໜ້າທີ່ ທີ່ຈະຕ້ອງມີການປະຕິບັດງານດັ່ງກ່າວໃຫ້ ເປັນໄປຕາມກົດໝາຍແຮງງານ ແລະ ກົດໝາຍອື່ນ ໆ ຂອງປ ສປປ. ລາວ ລວມເຖິງການປະກາດລະບຽບຄໍາ ສັ່ງ ຂໍ້ບັງຄັບວ່າດ້ວຍເລື່ອງການຄຸ້ມຄອງແຮງງານໃນສ່ວນທີ່ກ່ຽວຂ້ອງກັບບຸກຄົນດັ່ງກ່າວທຸກປະການ ຖ້າພະນັກງານຂອງຜູ້ໃຫ້ບໍລິການໄດ້ຮັບບາດເຈັບ ພິການ ຫຼືເສຍຊີວິດໃນຂະນະທີ່ມີການປະຕິບັດຕາມສັນຍາຈ້າງ ງານນີ້ ຜູ້ໃຫ້ບໍລິການຈະຕ້ອງຮັບຜິດຊອບ ແລະ ດໍາເນີນການຊົດໃຊ້ຄ່າເສຍຫາຍ ຄ່າທົດແທນ ຫຼື ຄ່າໃຊ້ ຈ່າຍອື່ນ ໆ ໃຫ້ກັບພະນັກງານຂອງຜູ້ໃຫ້ບໍລິການແຕ່ຝ່າຍດຽວ ໂດຍບໍ່ຈັດຢູ່ໃນຄວາມຮັບຜິດຊອບຂອງ ບໍລິສັດ ໄຟຟ້າຫົງສາ ຈໍາກັດ.

7.17 ຜູ້ສະເໜີລາຄາຕ້ອງຈ່າຍຄ່າຈ້າງໃຫ້ກັບເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາບໍ່ນ້ອຍກວ່າຄ່າອັດຕາຄ່າ ຈ້າງຂັ້ນຕໍ່າຕາມກົດໝາຍຂອງ ສປປ. ລາວ.

7.18 ຜູ້ຄວບຄຸມງານ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ມີສິດໃນການແຈ້ງຜູ້ສະເໜີລາຄາໃຫ້ປ່ຽນຕົວເຈົ້າໜ້າທີ່ຮັກສາ ຄວາມປອດໄພຂອງຜູ້ສະເໜີລາຄາ ເພື່ອປະສິດທິພາບໃນການປະຕິບັດງານ ເຈົ້າໜ້າທີ່ຮັກສາຄວາມປອດໄພ ຂອງຜູ້ສະເໜີລາຄາ ຕ້ອງປະພຶດ ຫຼື ປະຕິບັດ ງານຕາມຄໍາສັ່ງຂອງຜູ້ຄວບຄຸມງານ ກໍລະນີ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ເຫັນວ່າ ປະພຶດຕົນບໍ່ເໝາະສົມ ບໍ່ປະຕິບັດຕາມຄໍາສັ່ງຂອງຜູ້ຄວບຄຸມງານພົບຄວາມບົກຜ່ອງໃນ ກໍລະນີປະຕິບັດງານ ເຊັ່ນ: ຫຼັບໃນລະຫວ່າງປະຕິບັດງານໜ້າທີ່ ເມົາເຫຼົ້າ ເສບສານເສບຕິດ ຫຼື ກວດພົບ ວ່າຂາດຄຸນສົມບັດ ຕາມຂໍ້ 6.1 ບໍລິສັດ ໄຟຟ້າຫົງສາ ຈໍາກັດ ຈະປັບຜູ້ສະເໜີລາຄາ ຕາມຂໍ້ 11 ການປັບໃໝ ແລະ ຜູ້ສະເໜີລາຄາຕ້ອງປ່ຽນຄົນ ໃນມື້ຕໍ່ໄປ ຫຼັງຈາກທີ່ໄດ້ຮັບແຈ້ງ.

7.19 ຜູ້ສະເໜີລາຄາ ແລະ ພະນັກງານຮັກສາຄວາມປອດໄພຂອງຜູ້ສະເໜີລາຄາຈະຕ້ອງປະຕິບັດຕາມນະໂຍບາຍ ມາດຖານ ແລະ ຂັ້ນຕອນປະຕິບັດງານດ້ານຄວາມໝັ້ນຄົງປອດໄພດ້ານຂໍ້ມູນຂ່າວສານ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຕະຫຼອດໄລຍະເວລາຈ້າງ ລວມເຖິງເມື່ອສັນຍາຈ້າງສິ້ນສຸດແລ້ວບໍ່ນ້ອຍກວ່າ 3 ປີ ຜູ້ສະເໜີລາຄາ ແລະ ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາ ຈະບໍ່ນໍາຂໍ້ມູນຂອງ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ໄປ ເປີດເຜີຍ ເວັ້ນແຕ່ເປັນການເປີດເຜີຍຕາມທີ່ກົດໝາຍກໍານົດ ເຊິ່ງຈະຕ້ອງໄດ້ຮັບຄວາມຍິນຍອມຈາກ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ກ່ອນ ຖ້າຫາກຜູ້ສະເໜີລາຄາ ຫຼື ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາ ບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວຂ້າງຕົ້ນ ເປັນເຫດໃຫ້ ບໍລິສັດ ໄຟຟ້າຫົງສາ ໄດ້ຮັບຄວາມເສຍຫາຍຢ່າງໃດຢ່າງໜຶ່ງ ຜູ້ສະເໜີລາຄາຈະຕ້ອງຮັບຜິດ

ຊົດໃຊ້ຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ ແລະ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ມີສິດຍົກເລີກສັນຍາໄດ້ທັນທີ.

7.20 ຜູ້ສະເໜີລາຄາຈະຕ້ອງທໍາການຈ່າຍຄ່າຊົດເຊີຍຕາມກົດໝາຍໃຫ້ແກ່ພະນັກງານທຸກຄົນເມື່ອສິ້ນສຸດສັນຍາ ແລະ ທາງຜູ້ສະເໜີລາຄາຈະບໍ່ໄດ້ເປັນຜູ້ຮັບການພິຈາລະນາ ໃນກໍການເປັນຜູ້ໃຫ້ບໍລິການໃນສັນຍາຕໍ່ໄປ ຖ້າຫາກຜູ້ສະເໜີລາຄາບໍ່ໄດ້ຈ່າຍຄ່າຊົດເຊີຍຕາມກົດໝາຍ ຫຼື ຈ່າຍຄ່າບໍ່ຄົບຖ້ວນທາງຜູ້ວ່າຈ້າງສາມາດທີ່ຈະ ຫັກຄ່າໃຊ້ຈ່າຍດັ່ງກ່າວ Retention Money ທີ່ຜູ້ສະເໜີລາຄາໄດ້ສົ່ງມອບໃຫ້ແກ່ຜູ້ວ່າຈ້າງໄດ້ທັນທີ່.

**8. <u>ວັດຖຸ ອຸປະກອນ ເຄື່ອງມືເຄື່ອງໃຊ້ ໃນການຮັກສາຄວາມປອດໄພ</u>**

8.1 ຜູ້ສະເໜີລາຄາຕ້ອງເປັນຜູ້ຈັດຫາເຄື່ອງແບບພະນັກງານຂອງຜູ້ສະເໜີລາຄາ ຕ້ອງເປັນແບບທີ່ສຸພາບຮຽບຮ້ອຍ ເໝາະສົມ ແລະ ຕ້ອງໄດ້ຮັບຄວາມເຫັນຊອບຈາກ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ແລະ ມີອຸປະກອນປ້ອງກັນອັນຕະລາຍສ່ວນບຸກຄົນ ພື້ນຖານປະກອບດ້ວຍ ໝວກນິລະໄພ, ເກີບເຊບຕີ້, ເສື້ອສະທ້ອນແສງ, ແວ່ນຕານິລະໄພ ແລະ ອຸປະກອນປ້ອງກັນອັນຕະລາຍສ່ວນບຸກຄົນຕາມພື້ນທີ່ ທີ່ມີປັດໃຈສ່ຽງ ເຊັ່ນ: ໜ້າກາກກອງອານຸພາກຝຸ່ນ ແວ່ນຕານິລະໄພ, ປັກອຸດຫູລົດສຽງເປັນຕົ້ນ ໂດຍຕ້ອງສວມໃສ່ເຄື່ອງແບບ ແລະ ອຸປະກອນປ້ອງກັນອັນຕະລາຍສ່ວນບຸກຄົນທີ່ມີມາດຕະຖານຮອງຮັບໃຫ້ຄົບຖ້ວນຕັ້ງແຕ່ວັນທໍາອິດ ທີ່ເລີ່ມສັນຍາ.

8.2 ພະນັກງານຮັກສາຄວາມປອດໄພຂອງຜູ້ສະເໜີລາຄາທຸກຄົນຕ້ອງມີປ້າຍຊື່ ແລະນາມສະກຸນຕິດໄວ້ໃນຕໍາແໜ່ງ ທີ່ສາມາດອ່ານໄດ້ຊັດເຈນ ແລະ ຕ້ອງຕິດສັນຍາລັກສະແດງວ່າເປັນເຈົ້າໜ້າທີ່ຮັກສາຄວາມປອດໄພຜູ້ຮັບ ຈ້າງ ສັງກັດ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ.

8.3 ຈັດໃຫ້ພະນັກງານຮັກສາຄວາມປອດໄພຂອງຜູ້ສະເໜີລາຄາທຸກຄົນມີໄຟສາຍ, ກະບອງເຫຼັກກະແຈມື ໝາກຫວີດ ແລະ ໄຟສາຍປະຈໍາຕົວເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາທຸກຄົນ.

8.4 ຈັດໃຫ້ມີວິທະຍຸສື່ສານຈໍານວນ 52 ເຄື່ອງ ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ ສປປ ລາວ (ລປພ. 37 ເຄື່ອງ ຜູ້ຄວບຄຸມງານ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ. 7 ເຄື່ອງ ສາຍກວດ ແລະ ຜູ້ຊ່ວຍສາຍກວດ 5 ເຄື່ອງ ແລະ ສາຮອງ 3 ເຄື່ອງ).

8.5 ຈັດໃຫ້ມີໂທລະສັບພ້ອມເຕີມເງິນໃຫ້ຫົວໜ້າສາຍກວດເຄື່ອງໃຫ້ໂທລາຍງານຜົນການປະຕິບັດງານຕໍ່ຜູ້ ຄວບຄຸມງານ ບໍລິສັດ ໄຟຟ້າ ຫົງສາ ທຸກວັນ.

8.6 ຈັດໃຫ້ມີເຄື່ອງມືເປົ່າແອວກໍຮໍຈໍານວນ 3 ເຄື່ອງ ມີຄຸນນະພາບດີ ທໍາງານດ້ວຍຄວາມວ່ອງໄວ ແລະ ມີປະສິດທິ ພາບໂດຍມີເອກະສານຢັ້ງຢືນຄຸນນະພາບ ປະຈໍາປ້ອມຍາມ MainGate1, MainGate2 ແລະ ສໍານັກງານໂພນຈັນ.

8.7 ຈັດໃຫ້ມີເຄື່ອງມືກວດໂລຫະ ຈຳນວນ 4 ເຄື່ອງ ທີ່ມີຄຸນນະພາບດີທຳງານດ້ວຍຄວາມວ່ອງໄວ ແລະ ມີປະສິດທິພາບໂດຍມີເອກະສານຢັ້ງຢືນຄຸນນະພາບ ປະຈຳປ້ອມຍາມ MainGate1, MainGate2 ຈຸດລະ 2 ເຄື່ອງ.

8.8 ຈັດໃຫ້ມີລົດກວດໜ້າງານຮັກສາຄວາມປອດໄພ ທີ່ຢູ່ໃນສະພາບດີ ພ້ອມນ້ຳມັນ ແລະ ຄົນຂັບສຳລັບກວດງານຢ່າງນ້ອຍ 2 ຄັນ ແລະ ປະຈຳຢູ່ໃນພື້ນທີ່ປະຕິບັດງານ 24 ຊົ່ວໂມງ (1 ຄັນ ສຳລັບ ກວດກາໃນພື້ນທີ່ປະຕິບັດງານບໍ່ແຮ່ ແລະ 1 ຄັນສຳລັບກວດກາພື້ນທີ່ໂຮງໄຟຟ້າ, ພື້ນທີ່ສຳນັກງານ ແລະ ບ້ານພັກ).

8.9 ຈັດໃຫ້ມີລົດບໍລິການ 6 ລໍ້ ທີ່ຢູ່ໃນສະພາບດີ ພ້ອມນ້ຳມັນ ແລະ ຄົນຂັບ ຢ່າງນ້ອຍ 2 ຄັນເພື່ອຮັບ-ສົ່ງ ແລະ ຈັດຫານ້ຳດື່ມໃຫ້ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາປະຕິບັດງານໃນພື້ນທີ່ຮັບຜິດຊອບ ທີ່ກຳນົດໄວ້ ຕາມຕາລາງທີ່ 1-3.

8.10 ຈັດໃຫ້ມີລົດບໍລິການ 4 ລໍ້ ທີ່ຢູ່ໃນສະພາບດີ ພ້ອມນ້ຳມັນ ແລະ ຄົນຂັບ ຢ່າງນ້ອຍ 1 ຄັນເພື່ອຮັບ-ສົ່ງ ແລະ ຈັດຫານ້ຳດື່ມໃຫ້ເຈົ້າໜ້າທີ່ຮັກສາຄວາມປອດໄພຂອງຜູ້ສະເໜີລາຄາໃນພື້ນທີ່ WEP (ບ້ານກໍ່ວງົ້ວເກົ່າ).

## 9. ຂໍ້ກຳນົດດ້ານຄວາມປອດໄພ ສຸກຂະພາບອະນາໄມແລະສິ່ງແວດລ້ອມໃນການປະຕິບັດງານ

9.1 ຜູ້ສະເໜີລາຄາຕ້ອງປະຕິບັດຕາມກົດລະບຽບການເຂົ້າ-ອອກ ຂອງບໍລິສັດ ຫຼື ສະຖານທີ່ປະຕິບັດງານຢ່າງເຄັ່ງຄັດ.

9.2 ຜູ້ສະເໜີລາຄາຕ້ອງຈັດໃຫ້ມີຜູ້ປະຕິບັດງານຂອງຜູ້ສະເໜີລາຄາທຸກຄົນທີ່ຕ້ອງປະຕິບັດງານຕາມສັນຍາ ເຂົ້າຟັງການຊີ້ແຈ້ງມາດຕະການເພື່ອ ຄວາມປອດໄພຈາກຜູ້ວ່າຈ້າງ ກ່ອນເລີ່ມປະຕິບັດງານຕາມສັນຍາ.

9.3 ຜູ້ປະຕິບັດງານຂອງຜູ້ຈ້າງຕ້ອງຕິດບັດສະແດງຕົນຕະຫຼອດເວລາຂະນະປະຕິບັດງານຢູ່ໃນບໍລິເວນສະຖານ ທີ່ປະຕິບັດງານ ແລະ ຫ້າມບໍ່ໃຫ້ເຂົ້າໄປເຂດຫວງຫ້າມຕາມຜູ້ຈ້າງກຳນົດ ຍົກເວັ້ນຈະໄດ້ຮັບຄວາມຍິນ ຍອມຈາກຜູ້ວ່າຈ້າງ.

9.4 ພະນັກງານຂອງຜູ້ສະເໜີລາຄາຕ້ອງແຕ່ງເຄື່ອງແບບທີ່ຄືກັນທຸກຄົນ ແລະ ເປັນເຄື່ອງແບບທີ່ສາມາດຈຳແນກ ໄດ້ຢ່າງ ຊັດເຈນວ່າເປັນຜູ້ປະຕັດງານຂອງຜູ້ສະເໜີລາຄາ.

9.5 ພະນັກງານຂອງຜູ້ສະເໜີລາຄາຈະຕ້ອງເບິ່ງແຍງສັບສິນ ທີ່ນຳເຂົ້າມາໃນບໍລິເວນສະຖານທີ່ປະຕິບັດງານເຊິ່ງຜູ້ ວ່າຈ້າງຈະບໍ່ຮັບຜິດຊອບໃດໆ ໃນກໍລະນີເກີດການເປ່ເພ ຫຼື ເສຍຫາຍ.

9.6 ຫ້າມພະນັກງານຂອງຜູ້ສະເໜີລາຄາ ດື່ມແອວກໍຮໍ, ເສບຢາເສບຕິດທຸກຊະນິດລະຫວ່າງປະຕິບັດງານໂດຍ ເດັດຂາດ ລວມທັງບໍ່ໃຫ້ສູບຢາໃນທີ່ຫ້າມສູບ ແລະ ຜູ້ວ່າຈ້າງ ມີສິດສັ່ງລະງັບຜູ້ປະຕິບັດງານຂອງຜູ້ສະເໜີລາຄາທີ່ມີ ອາການມຶນເມົາຈາກແອວກໍຮໍ, ຢາເສບຕິດ ຫຼື ສະພາບ ທາງຮ່າງກາຍ ແລະ ຈິດໃຈທີ່ບໍ່ພ້ອມປະຕິບັດງານເຂົ້າປະຕິບັດງານ ແລະ ຫ້າມຫຼິ້ນການພະນັນທຸກຊະນິດ ໂດຍເດັດຂາດ

ຫາກພະນັກງານຮັກສາຄວາມປອດໄພຂອງບໍລິສັດຜູ້ສະເໜີລາຄາຖືກກວດພົບ ແລະ ບໍ່ເປັນໄປ ຕາມນະໂຍບາຍຂອງບໍລິສັດ ຫຼື ກວດສອບພົບວ່າມີສານເສບຕິດ ບໍລິສັດຈະດຳເນີນການອອກໜັງສືເຕືອນໃຫ້ຜູ້ສະເໜີລາຄາເປັນລາຍລັກອັກສອນ ແລະ ຜູ້ສະເໜີລາຄາຈະຕ້ອງຈັດຫາພະນັກງານຮັກສາຄວາມປອດໄພມາທົດແທນຄົນດັ່ງກ່າວ ແລະ ຜູ້ສະເໜີລາຄາຈະບໍ່ມີສິດຮຽກຮ້ອງຄ່າເສຍຫາຍໃດໆ ຈາກບໍລິສັດ ທັງໝົດ.

9.7 ພະນັກງານຂອງຜູ້ສະເໜີລາຄາຈະຕ້ອງຫ້າມ ການຜິດຖຽງກັນ ພາຍໃນເຂດບໍລິເວນສະຖານທີ່ປະຕິບັດງານ ແລະ ຫ້າມນຳອາວຸດປືນ, ລູກປືນ ແລະ ວັດຖຸລະເບີດ ຫຼື ອາວຸດອື່ນ ໆ ເຂົ້າມາພາຍໃນພື້ນໂດຍເດັດຂາດ.

9.8 ໃນກໍລະນີເກີດອຸປະຕິເຫດກັບພະນັກງານຂອງຜູ້ສະເໜີລາຄາ ຜູ້ສະເໜີລາຄາຈະຕ້ອງແຈ້ງໃຫ້ຜູ້ຄວບຄຸມງານຮັບຮູ້ ດ້ວຍວາຈາພາຍໃນເວລາ 24 ຊົ່ວໂມງ ນັບຈາກເກີດອຸປະຕິເຫດເກີດຂຶ້ນ ແລະ ຕ້ອງຈັດທຳລາຍງານອຸປະຕິເຫດໃນແບບຟອມ HPC-ESD-FO-034 V.00 ແລະ HPC-ESD-FO-021 V.02 ແລະ ຈະຕ້ອງໃຫ້ຄວາມຮ່ວມມືໃນການເຂົ້າ ສອບສວນອຸປະຕິເຫດຕາມທີ່ບຸກຄາລາກອນຂອງຜູ້ວ່າຈ້າງເອີ້ນສອບສວນ.

**10. ໄລຍະເວລາການເຮັດວຽກ ແລະ ກຳນົດສົ່ງມອບງານ**

ໄລຍະເວລາການຈ້າງງານແມ່ນເລີ່ມຕັ້ງແຕ່ ວັນທີ່ 1 ເມສາ 2024 ເຖິງ ວັນທີ່ 31 ມີນາ 2027

**ກຳນົດສົ່ງມອບງານ 36 ງວດ ດັ່ງນີ້**

| ງວດທີ່ | ກຳນົດສົ່ງມອບງານ | ງວດທີ່ | ກຳນົດສົ່ງມອບງານ | ງວດທີ່ | ກຳນົດສົ່ງມອບງານ |
|---|---|---|---|---|---|
| 1 | 30 ເມສາ 2024 | 13 | 30 ເມສາ 2025 | 25 | 30 ເມສາ 2026 |
| 2 | 31 ພຶດສະພາ 2024 | 14 | 31 ພຶດສະພາ 2025 | 26 | 31 ພຶດສະພາ 2026 |
| 3 | 30 ມິຖຸນາ 2024 | 15 | 30 ມິຖຸນາ 2025 | 27 | 30 ມິຖຸນາ 2026 |
| 4 | 31 ກໍລະກົດ 2024 | 16 | 31 ກໍລະກົດ 2025 | 28 | 31 ກໍລະກົດ 2026 |
| 5 | 31 ສິງຫາ 2024 | 17 | 31 ສິງຫາ 2025 | 29 | 31 ສິງຫາ 2026 |
| 6 | 30 ກັນຍາ 2024 | 18 | 30 ກັນຍາ 2025 | 30 | 30 ກັນຍາ 2026 |
| 7 | 31 ຕຸລາ 2024 | 19 | 31 ຕຸລາ 2025 | 31 | 31 ຕຸລາ 2026 |
| 8 | 30 ພະຈິກ 2024 | 20 | 30 ພະຈິກ 2025 | 32 | 30 ພະຈິກ 2026 |
| 9 | 31 ທັນວາ 2024 | 21 | 31 ທັນວາ 2025 | 33 | 31 ທັນວາ 2026 |
| 10 | 31 ມັງກອນ 2025 | 22 | 31 ມັງກອນ 2026 | 34 | 31 ມັງກອນ 2027 |
| 11 | 28 ກຸມພາ 2025 | 23 | 28 ກຸມພາ 2026 | 35 | 28 ກຸມພາ 2027 |
| 12 | 31 ມີນາ 2025 | 24 | 31 ມີນາ 2026 | 36 | 31 ມີນາ 2027 |

**11. ການປັບໃໝ**

11.1 ໃນກໍລະນີຂອງຜູ້ສະເໜີລາຄາ ບໍ່ສາມາດຈັດຫາເຈົ້າໜ້າທີ່ຮັກສາຄວາມປອດໄພເຂົ້າເຮັດວຽກ ຄົບຕາມຈຳນວນທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ເຈົ້າໜ້າທີ່ຮັກສາຄວາມປອດໄພບໍ່ສາມາດປະຕິບັດໜ້າທີ່ໄດ້ ຫຼື ສິ່ງເຈົ້າໜ້າທີ່ຮັກສາຄວາມປອດໄພທີ່ຂາດຄຸນສົມບັດຂອງເຈົ້າໜ້າທີ່ຮັກສາຄວາມປອດໄພຕາມມາດຕາ 6.1 ເຂົ້າມາເຮັດວຽກ ແລະ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຍັງບໍ່ທັນໄດ້ຍົກເລີກສັນຍາ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະບໍ່ຈ່າຍຄ່າບໍລິການໃນມື້ນັ້ນ, ຄິດໄລ່ເປັນລາຍວັນສະເລ່ຍຕໍ່ຄົນ (1 ເດືອນເທົ່າກັບຈຳນວນວັນຕາມປະຕິທິນ) ແລະ ປັບໃນອັດຕາເທົ່າກັບ 1 % ຕໍ່ຄົນ ຂອງຄ່າບໍລິການຕໍ່ເດືອນຕາມມູນຄ່າສັນຍາ ລວມເຖິງປັບໃນອັດຕາ 300 ບາດ/ມື້ເຮັດວຽກລວມຂອງເຈົ້າໜ້າທີ່ຮັກສາຄວາມປອດໄພທີ່ຂາດ

11.2 ກໍລະນີມີພຶດຕິກຳທີ່ບໍ່ເໝາະສົມ ຫຼື ບໍ່ປະຕິບັດຕາມຄຳສັ່ງ ຫຼື ພົບເຫັນຂໍ້ບົກພ່ອງໃນການປະຕິບັດວຽກງານ ປະຕິບັດງານເກີນໄລຍະເວລາທີ່ກຳນົດໄວ້ ຫຼື ໃນກໍລະນີເຂົ້າມາເຮັດວຽກໃຫ້ບໍລິສັດໄຟຟ້າ ຫົງສາ ຈຳກັດ ແລະ ມີການປ່ຽນແປງ ພະນັກງານຮັກສາຄວາມປອດໄພຂອງຜູ້ສະເໜີລາຄາ ຜູ້ສະເໜີລາຄາບໍ່ແຈ້ງລາຍລະອຽດໃນຂໍ້ 7.1 ໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ພິຈາລະນາໃຫ້ຄວາມເຫັນຊອບກ່ອນເຂົ້າປະຕິບັດງານ ຫຼື ບໍ່ໄດ້ຮັບການອົບຮົມ ຫຼັກສູດຄວາມປອດໄພ ສຸຂະພາບອະນາໄມ ສິ່ງແວດລ້ອມ ແລະ ຮັກສາຄວາມປອດໄພ ສຳລັບຜູ້ປະຕິບັດງານໃໝ່ຕາມມາດຕາ 7.6 ຫຼື ຜູ້ທີ່ມີຄວາມບົກຜ່ອງ ຕໍ່ໜ້າທີ່ໃນຂະນະປະຕິບັດງານ ເຊັ່ນ: ນອນຫຼັບ ໃນຂະນະປະຕິບັດໜ້າທີ່ ບໍ່ໄດ້ລົງກວດກາພື້ນທີ່ຕາມຄຳສັ່ງຂອງຜູ້ຄຸມສັ່ງການ ບໍ່ກວດສອບເຄື່ອງຕ່າງ ໆ ພາຫະນະເຂົ້າ-ອອກ ຈາກພື້ນທີ່ຮັບຜິດຊອບ ຫຼື ປ່ອຍໃຫ້ບຸກຄົນພາຍນອກທີ່ບໍ່ໄດ້ຮັບອະນຸຍາດເຂົ້າມາໃນເຂດຮັບຜິດຊອບ ຫຼິ້ນໂທລະສັບໂດຍບໍ່ສົນໃຈການປະຕິບັດງານ ຫຼື ຫຼັບໃນລະຫວ່າງປະຕິບັດໜ້າທີ່ ຜູ້ສະເໜີລາຄາຈະຕ້ອງດຳເນີນການຕັກເຕືອນ ແລະ ດຳເນີການຈັດຫາບຸກຄາລາກອນ ທີ່ມີຄຸນສົມບັດຕາມຂໍ້ 6.1 ເພື່ອເຮັດວຽກແທນບຸກຄົນດັ່ງກ່າວ ແລະ ຈັດຫາຢ່າງຊ້າບໍ່ເກີນພາຍໃນ 2 ຊົ່ວໂມງ ໂດຍຜູ້ສະເໜີລາຄາຈະຕ້ອງແຈ້ງຄວາມບົກຜ່ອງໃນແຕ່ລະຄັ້ງເປັນໜັງສືໃຫ້ຜູ້ວ່າຈ້າງຮັບຮູ້ພາຍໃນ 3 ວັນ ທຳການໂດຍນັບຈາກວັນທີ່ຮູ້ເຫດການດັ່ງກ່າວໃນກໍລະນີຜູ້ວ່າຈ້າງ ພິຈາລະນາຄຳຊີ້ແຈ້ງແລ້ວເຫັນວ່າບໍ່ມີເຫດອັນສົມຄວນ ຫຼື  ໃນກໍລະນີຜູ້ສະເໜີລາຄາບໍ່ຊີ້ແຈງພາຍໃນໄລຍະເວລາທີ່ກຳນົດ ຜູ້ວ່າຈ້າງມີສິດປັບຜູ້ສະເໜີລາຄາໄດ້ໂດຍຜູ້ສະເໜີລາຄາຍິນຍອມໃຫ້ປັບໃໝຜູ້ສະເໜີລາຄາ ໃນອັດຕາ 250 ບາດ/ຄົນ/ຄັ້ງ.

11.3 ກໍລະນີເຄື່ອງແບບຂອງພະນັກງານຜູ້ສະເໜີລາຄາ ອຸປະກອນປ້ອງກັນສ່ວນບຸກຄົນ, ສັນຍາລັກ, ປ້າຍຊື່ ແລະ ອຸປະກອນຮັບໃຊ້ວຽກງານສ່ວນບຸກຄົນບໍ່ຄົບຖ້ວນຕາມຂໍ້ 9.1, 9.2, 9.3 ບໍລິສັດ ໄຟຟ້າຫົງສາ ຈຳກັດ ຈະປັບໃໝຜູ້ສະເໜີລາຄາ 150 ບາດ/ຄົນ/ຄັ້ງ.

11.4 ກໍລະນີທີ່ຜູ້ສະເໜີລາຄາບໍ່ມີວັດສະດຸ, ອຸປະກອນ, ເຄື່ອງມື ແລະ ເຄື່ອງໃຊ້ ໃນການຮັກສາຄວາມປອດໄພຕາມຂໍ້ 9.4, 9.5, 9.6, 9.7, ບໍ່ຄົບຕາມສັນຍາ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ. ຈະປັບໃໝຜູ້ສະເໜີລາຄາ ໃນອັດຕາ 500 ບາດ/ອຸປະກອນ/ມື້.

11.5 ກໍລະນີຜູ້ວ່າຈ້າງພົບວ່າ ຜູ້ສະເໜີລາຄາມີ ລົດບໍລິການ ແລະ ລົດກວດໜ້າງານ ບໍ່ເປັນໄປຕາມຂໍ້ 9.8, 9.9, 9.10 ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະປັບໃໝຜູ້ສະເໜີລາຄາ ໃນອັດຕາ 1,000 ບາດ/ຄັນ/ຄັ້ງ

11.6 ກໍລະນີຜູ້ວ່າຈ້າງພົບວ່າຜູ້ສະເໜີລາຄາບໍ່ດຳເນີນການກວດສອບສຸຂະພາບປະຈຳປີຕາມຂໍ້ 7.14 ພາຍໃນໄລຍະເວລາ 60 ມື້ ຕາມແຜນ ບໍລິສັດ ໄຟຟ້າ ຫົງສາ ຈະປັບໃໝຜູ້ສະເໜີລາຄາ ປັບໃນອັດຕາເທົ່າກັບ 1 % ຕໍ່ຄົນ ຂອງຄ່າບໍລິການຕໍ່ເດືອນຕາມມູນຄ່າສັນຍາຈົນກວ່າຈະໄດ້ດຳເນີນການສຳເລັດ

11.7 ກໍລະນີຜູ້ວ່າຈ້າງພົບວ່າຜູ້ສະເໜີລາຄາບໍ່ຝຶກອົບຮົມ, ທົບທວນຫຼັກສູດທີ່ກ່ຽວຂ້ອງກັບການປະຕິບັດວຽກ ແລະ ຄວາມປອດໄພປະຈຳປີ ຕາມຂໍ້ 7.6, 7.7 ພາຍໃນໄລຍະເວລາ 60 ມື້ຕາມແຜນ ບໍລິສັດ ໄຟຟ້າ ຫົງສາ ຈະປັບໃໝຜູ້ສະເໜີລາຄາ ປັບໃນອັດຕາເທົ່າກັບ 1 % ຕໍ່ຄົນ ຂອງຄ່າບໍລິການຕໍ່ເດືອນຕາມມູນຄ່າສັນຍາຈົນກວ່າຈະດຳເນີນການສຳເລັດ

11.8 ກໍລະນີຜູ້ສະເໜີລາຄາບໍ່ນຳສຳເນົາເອກະສານປະກັນສັງຄົມ ແລະ ປະກັນອຸປະຕິເຫດ ພາຍໃນ 15 ວັນຫຼັງຈາກເລີ່ມສັນຍາ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຂໍສະຫງວນສິດທີ່ບໍ່ຈ່າຍຄ່າບໍລິການໃນງວດລາຍເດືອນນັ້ນໆ ຈົນກວ່າ ຜູ້ສະເໜີລາຄາຈະນຳເອກະສານປະກັນດັ່ງກ່າວມາມອບໃຫ້ກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

11.9 ກໍລະນີຜູ້ສະເໜີລາຄາ ຫຼື ພະນັກງານບົກພ່ອງຕໍ່ໜ້າທີ່ ເຮັດໃຫ້ອຸປະກອນ ຊັບສິນຂອງ ບໍລິສັດ ໄຟຟ້າ ຫົງສາ ເສຍຫາຍ ຜູ້ສະເໜີລາຄາຕ້ອງໃຊ້ແທນຕາມລາຄາຂອງສັບສິນທີ່ເສຍຫາຍ

## 12. ການຈ່າຍເງິນ

12.1 ເງື່ອນໄຂການຊຳລະເງິນ ມີດັ່ງນີ້:

a) ໃນກໍລະນີທີ ຜູ້ສະເໜີລາຄາສົ່ງເອກະສານ ໃບແຈ້ງໜີ້ ລະຫວ່າງວັນທີ 1-15 ຂອງເດືອນ ບໍລິສັດຈະຊຳລະເງິນຄ່າຈ້າງໃຫ້ແກ້ຜູ້ສະເໜີລາຄາ ພາຍໃນວັນທີ 10 ຂອງເດືອນຖັດໄປ.

ໃນກໍລະນີທີໃບແຈ້ງໜີ້ບໍ່ຖືກຕ້ອງ ຫຼື ວຽກງານບໍ່ແລ້ວຕາມກຳໜົດ ຜູ້ສະເໜີລາຄາຕ້ອງສົ່ງໃບແຈ້ງໜີ້ສະບັບແກ້ໄຂໃຫ້ ບໍລິສັດ ຫຼື ແກ້ໄຂ ຫຼື ສົ່ງມອບວຽກງານໃຫ້ແລ້ວເສັດຕາມຕົກລົງ ຈົນເປັນທີ່ພໍໃຈຂອງ ບໍລິສັດ ພາຍໃນວັນທີ 15 ຂອງເດືອນນັ້ນ ໆ ບໍລິສັດ ຈະຈ່າຍເງິນໃຫ້ຜູ້ສະເໜີລາຄາພາຍໃນວັນທີ 10 ຂອງເດືອນຖັດໄປ.

b) ໃນກໍລະນີຜູ້ສະເໜີລາຄາສົ່ງເອກະສານ ໃບແຈ້ງໜີ້ ລະຫວ່າງວັນທີ 16-31 ຂອງເດືອນ ບໍລິສັດຈະຊຳລະເງິນຄ່າຈ້າງໃຫ້ກັບຜູ້ຮັບ ເໝົາພາຍໃນວັນທີ 25 ຂອງເດືອນຖັດໄປ.

ໃນກໍລະນີທີໃບແຈ້ງໜີ້ບໍ່ຖືກຕ້ອງ ຫຼື ວຽກງານບໍ່ແລ້ວຕາມກຳໜົດ ຜູ້ສະເໜີລາຄາຕ້ອງສົ່ງໃບແຈ້ງໜີ້ສະບັບແກ້ໄຂໃຫ້ ບໍລິສັດ ຫຼື ແກ້ໄຂ ຫຼື ສົ່ງມອບວຽກງານໃຫ້ແລ້ວເສັດຕາມຕົກລົງ ຈົນເປັນທີພໍໃຈຂອງ ບໍລິສັດ ພາຍໃນທ້າຍດືອນ ຂອງເດືອນນັ້ນ ໆ ບໍລິສັດ ຈະຈ່າຍເງິນໃຫ້ຜູ້ສະເໜີລາຄາພາຍໃນວັນທີ 25 ຂອງເດືອນຖັດໄປ.

12.2 ຄ່າລ່ວງເວລາ ຫຼື OT ຂອງພະນັກງານຈະເຮັດການເບີກຈ່າຍເມື່ອ ບໍລິສັດ ໄຟຟ້າຫົງສາ ຈຳກັດ ກວດສອບຄວາມຖືກຕ້ອງຮຽບຮ້ອຍແລ້ວ ເຊິ່ງຈະບໍ່ໄດ້ຮັບເງິນກົງຕາມງວດຂອງ ຄ່າບໍລິຫານຈັດການຂອງເດືອນນັ້ນໆ ແຕ່ຈະໄດ້ຮັບອີກງວດໜຶ່ງຂອງເດືອນຖັດໄປ ແລະ ຕ້ອງສົ່ງເອກະສານເພື່ອວາງບິນ ບໍ່ເກີນວັນທີ່ 5 ຂອງເດືອນຖັດໄປຈາກການໃຫ້ບໍລິການ ແລະ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະຊຳລະເງິນຕາມເງື່ອນໄຂ ຂໍ້ 12.1

12.3 ໃຫ້ຜູ້ສະເໜີລາຄາສົ່ງໃບແຈ້ງໜີ້ເປັນສະກຸນເງິນບາດແລະບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະຊຳລະເງິນໃຫ້ທ່ານເປັນສະກຸນເງິນກີບເທົ່ານັ້ນໂດຍໃຊ້ອັດຕາແລກປ່ຽນທຸກໆວັນທີ 1 ຂອງເດືອນທີ່ໃຫ້ບໍລິການ ໂດຍໃຊ້ອັດຕາແລກປ່ຽນທີ່ປະກາດໂດຍທະນາຄານການຄ້າຕ່າງປະເທດ (BCEL) (ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ ສພຊ, ລົງວັນທີ 7 ກໍລະກົດ 2022).

12.4 ຫຼັງຈາກຄະນະກຳມະການກວດຮັບງານ ຈາກລາຍງານການປະຕິບັດງານ ປະຈຳເດືອນຂອງແຕ່ລະງວດງານແລ້ວ ການຈ່າຍເງິນຈະຈ່າຍເປັນງວດໆ ໂດຍຈະຫັກເງິນ Retention money 10% ຂອງການຈ່າຍເງິນແຕ່ລະງວດ ເພື່ອເປັນຫຼັກປະກັນສັນຍາ.

12.5 ບໍລິສັດ ໄຟຟ້າຫົງສາ ຈຳກັດ ຈະຄືນເງິນປະກັນຜົນງານທັງໝົດ (Retention money) ໃຫ້ ຜູ້ສະເໜີລາຄາ ພາຍໃນ 30 ວັນ ນັບຕັ້ງແຕ່ສິ້ນສຸດສັນຍາ ໂດຍບໍ່ມີຄ່າໃຊ້ຈ່າຍໃດ ໆ ທັງສິ້ນ

12.6 ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະດຳເນີນການຈ່າຍຄ່າຈ້າງໃຫ້ແກ່ຜູ້ສະເໜີລາຄາເປັນລາຍເດືອນ ຫຼື ຕາມຈຳນວນວັນທີ່ພະນັກງານມາປະຕິບັດງານໃຫ້ກັບບໍລິສັດ ແລະ ຫຼັງຈາກທີ່ມີການຫັກຄ່າຈ້າງ ຫຼື ຄ່າປັບໃໝ (ຖ້າມີ) ຕາມເງື່ອນໄຂໃນເອກະສານສັນຍາພາຍໃນ 30 ວັນ ນັບຈາກວັນທີ່ຄົບກຳນົດແຕ່ລະງວດ ຕາມກຳນົດສົ່ງມອບງານຂໍ້ 10 ໂດຍຜູ້ສະເໜີລາຄາຈະຕ້ອງການດຳເນີນການສົ່ງເອກະສານແຈ້ງໜີ້ ສຳລັບ ການວ່າຈ້າງ ພາຍໃນວັນທີ່ 10 ຂອງແຕ່ລະເດືອນ ແຕ່ຖ້າຜູ້ສະເໜີລາຄາມີການສົ່ງເອກະສານແຈ້ງໜີ້ຫຼັງວັນທີ່ 10 ທາງບໍລິສັດ ຈະດຳເນີນການຈ່າຍຄ່າຈ້າງໃຫ້ໃນເດືອນຖັດໄປ ໂດຍເອກະສານການວາງບິນຈະຕ້ອງຖືກຕ້ອງ ຄົບຖ້ວນສົມບູນຕາມຂໍ້ກຳນົດການວາງບິນດ້ານການບັນຊີຂອງບໍລິສັດ

**13. ການຜິດສັນຍາ**

13.1 ກໍລະນີທີ່ຜູ້ສະເໜີລາຄາບໍ່ປະຕິບັດຕາມຂໍ້ກຳນົດຂ້າງຕົ້ນ ຈະຖືວ່າເປັນການຜິດສັນຍາ ແລະ ບໍລິສັດ ໄຟຟ້າຫົງສາ ຈຳກັດ ມີສິດທີ່ຈະຊະລໍການກວດຮັບງານປະຈຳງວດທີ່ຜິດສັນຍານັ້ນ ຈົນກວ່າຜູ້ສະເໜີລາຄາຈະໄດ້ດຳເນີນການແກ້ໄຂແລ້ວເສັດ.

13.2 ກໍລະນີທີ່ບໍລິສັດ ໄຟຟ້າຫົງສາ ຈຳກັດ ພົບເຫັນສະພາບການ ຫຼື ການກະທຳໃດໆຂອງຜູ້ສະເໜີລາຄາທີ່ບໍ່ປອດໄພ ຫຼື ອາດກໍ່ໃຫ້ເກີດອຸບັດຕິເຫດ ບໍລິສັດ ໄຟຟ້າຫົງສາ ຈຳກັດ ມີສິດອຳນາດສັ່ງໃຫ້ຜູ້ສະເໜີລາຄາແກ້ໄຂທັນທີດ້ວຍວາຈາ ສັ່ງໃຫ້ຢຸດງານບາງສ່ວນ ຫຼື ທັງໝົດເປັນລາຍລັກອັກສອນ ກໍລະນີແບບນີ້ຜູ້ສະເໜີລາຄາຈະຮຽກຮ້ອງຄ່າເສຍຫາຍໃດໆຈາກ ບໍລິສັດ ໄຟຟ້າຫົງສາ ຈຳກັດ ບໍ່ໄດ້

13.3 ກໍລະນີບໍລິສັດ ໄຟຟ້າຫົງສາ ຈຳກັດ ໄດ້ແຈ້ງໃຫ້ຜູ້ສະເໜີລາຄາດຳເນີນການແກ້ໄຂສະພາບ ຫຼື ການກະທຳທີ່ບໍ່ປອດໄພແລ້ວ ຫາກຜູ້ສະເໜີລາຄາດຳເນີນການແກ້ໄຂຊັກຊ້າກວ່າເວລາທີ່ກຳນົດ ບໍລິສັດ ໄຟຟ້າຫົງສາ ຈຳກັດ ອາດເຂົ້າດຳເນີນການແກ້ໄຂ ຫຼື ຈ້າງບຸກຄົນອື່ນເຂົ້າມາດຳເນີນການແກ້ໄຂ ຜູ້ສະເໜີລາຄາຈະຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍດັ່ງກ່າວທັງໝົດ ໂດຍຫັກຈາກເງິນຄ່າງານທີ່ບໍລິສັດ ໄຟຟ້າຫົງສາ ຈຳກັດ ຈະຈ່າຍໃຫ້ຜູ້ສະເໜີລາຄາໃນງວດນັ້ນໆ

13.4 ກໍລະນີຜູ້ສະເໜີລາຄາຜິດສັນຍາຂໍ້ໃດຂໍ້ໜຶ່ງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ສະຫງວນສິດໃນການບອກເລີກສັນຍາໂດຍແຈ້ງລ່ວງໜ້າບໍ່ນ້ອຍກ່ວາ 30 ວັນ.

## 14. ການຍົກເລີກສັນຍາ

14.1 ຄູ່ສັນຍາທັງສອງຝ່າຍຕົກລົງຍິນຍອມໃນການຍົກເລີກສັນຍາ ຫາກຄູ່ສັນຍາຝ່າຍໃດຝ່າຍຫນຶ່ງທຳຜິດສັນຍາ ຄູ່ສັນຍາອີກຝ່າຍສາມາດບອກເລີກສັນຍາໄດ້ ໂດຍຄູ່ສັນຍາອີກຝ່າຍບໍ່ມີສິດຮຽກຮ້ອງຄ່າເສຍຫາຍໃດໆທີ່ເກີດຂຶ້ນໄດ້ ແລະ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ອີກຝ່າຍຮູ້ລ່ວງໜ້າກ່ອນ 30 ວັນ.

14.2 ໃນກໍລະນີທີ່ຄູ່ສັນຍາຝ່າຍໃດຝ່າຍໜຶ່ງເຮັດຜິດສັນຍາ ແລະ ກໍ່ໃຫ້ເກີດຄວາມເສຍຫາຍ ຄູ່ສັນຍາທີ່ໄດ້ຮັບຄວາມເສຍຫາຍມີສິດຮຽກຮ້ອງຄ່າເສຍຫາຍທີ່ເກີດຂຶ້ນຕາມຕົວຈິງໄດ້.

14.3 ບໍລິສັດ ໄຟຟ້າຫົງສາ ຈຳກັດ ຂໍສະຫງວນສິດ ໃນການປະເມີນຄຸນນະພາບ ໂດຍວັດຈາກຈຳນວນພະນັກງານຮັກສາຄວາມປອດໄພທີ່ປະຕິບັດຕາມເງື່ອນໄຂສັນຍາ ກໍລະນີທີ່ບໍ່ສາມາດຈັດຫາພະນັກງານເຂົ້າມາປະຕິບັດງານໄດ້ບໍ່ເກີນ 80 % ຕິດຕໍ່ກັນເກີນ 3 ເດືອນ ບໍລິສັດ ໄຟຟ້າຫົງສາ ຈຳກັດ ສາມາດຍົກເລີກສັນຍາໄດ້ທັນທີ

## 15. Annex 1: Bill of Quantities (BOQ)

ງານຈ້າງເໝົາທຳຈ້າງເໝົາ ບໍລິການ ຮັກສາຄວາມປອດໄພ ບໍລິສັດ ໄຟຟ້າຫົງສາ ຈຳກັດ ຖ້າຫາກມີຄ່າໃຊ້ຈ່າຍໃດໆທີ່ເກີດຂຶ້ນນອກຈາກທີ່ສະເໜີໃນ Bill of Quantities ຈະຕ້ອງເປັນຝ່າຍຜູ້ສະເໜີລາຄາຮັບຜິດຊອບທັງໝົດ.

**ງານຈ້າງເໝົາ ບໍລິສັດ ຮັກສາຄວາມປອດໄພ ບໍລິສັດ ໄຟຟ້າ ຫົງສາ ຈາກັດ**

**ຊ່ວງເວລາເດືອນ ເມສາ 2024-ມີນາ 2027 ລວມຈຳນວນວັນເຮັດວຽກ 36 ເດືອນ**

| ລາຍການ | ຈຳນວນ | ໜ່ວຍ | ລາຄາຫນ່ວຍ (ບາດ) | ເປັນເງີນ (ບາດ) | ໝາຍເຫດ |
|---|---|---|---|---|---|
| **1. ຄ່າບໍລິການຈັດການ** | | | | | - Fix Rate ເໝົາຈ່າຍຄົງທີ່ເປັນລາຍເດືອນ<br>- ສະຫວັດດີການເປັນໄປຕາມສັນຍາ ປະກອບດ້ວຍຢ່າງໜ້ອຍ ຄ່າປະກັນສັງຄົມ,ຄ່າປະກັນໄພກຸ່ມ ວົງເງີນຄຸ້ມຄອງໃນການເສຍຊີວິດບໍ່ຕ່ຳກ່ວາ 100,000 ບາດ, ຄ່າກວດສຸຂະພາບ 2 ຄັ້ງຕໍ່ປີ, ຄ່າຝຶກອົບຮົມ,ນ້ຳດື່ມຕາມຈຸດປ້ອມ ລປພ ແລະ ສະຖານທີ່ປະຕິບັດງານອື່ໆ ແລະ ອື່ນໆ |
| - ຄ່າດຳເນີນການ | 36 | ເດືອນ | | - | |
| - ຄ່າສະຫວັດດີການ | 36 | ເດືອນ | | | |
| | | | | - | |
| **2. ຄ່າແຮງງານ** | | | | | - Real Rate ຈ່າຍຕາມຈຳນວນທີ່ປະຕິບັດວຽກຕົວຈິງຕໍ່ຄົນຕໍ່ເດືອນ<br>- ລາຄາຕໍ່ໜ່ວຍໃຫ້ຄິດຈາກຈຳນວນຄົນຕໍ່ໄລຍະສັນຍາ (36 ເດືອນ) |
| - ສາຍກວດພະນັກງານຮັກສາຄວາມປອດໄພ | 4 | ຄົນ | | - | |
| - ຜູ້ຊ່ວຍສາຍກວດພະນັກງານຮັກສາຄວາມປອດໄພ | 6 | ຄົນ | | - | |
| - ພະນັກງານຮັກສາຄວາມປອດໄພ | 88 | ຄົນ | | - | |
| | | | | - | |
| **3.ອຸປະກອນແລະເຄື່ອງມື** | | | | | - Fix Rate ເໝົາຈ່າຍຄົງທີ່ເປັນລາຍເດືອນ<br>- ອຸປະກອນສຳລັບປະຕິບັດວຽກ (ຕະຫຼອດອາຍຸສັນຍາ)<br>1 ໂທລະສັບມືຖືສຳລັບສາຍກວດ ສາມາດໃຊ້ງານໄດ້ຕະຫຼອດ 24 ຊົ່ວໂມງ 2 ເຄື່ອງ<br>2 ວິທະຍຸຊື່ສານ (wakly talkie) 52 ເຄື່ອງ<br>3 ເຄື່ອງມືເປົ່າແອວກໍຮໍ 3 ເຄື່ອງ<br>4 ເຄື່ອງກວດໂລຫະ 4 ເຄື່ອງ<br>- ອຸປະກອນປະຈຳຕົວເຈົ້າໜ້າທີ່ຮັກສາຄວາມປອດໄພທັງໝົດ 98 ຄົນ ປະກອບດ້ວຍ ໄຟສາຍ, ກະບອງເຫຼັກ, ກະແຈມື, ນົກຫວີດ (ຕະຫຼອດອາຍຸສັນຍາ) |
| - ອຸປະກອນສຳລັບປະຕິບັດວຽກ | 36 | ເດືອນ | | - | |
| - ອຸປະກອນປະຈຳຕົວເຈົ້າໜ້າທີ່ຮັກສາຄວາມປອດໄພ | 36 | ເດືອນ | | - | |
| - ລົດບໍລິການ 6 ລໍ ຈຳນວນ 2 ຄັນ ພ້ອມຄົນຂັບ ແລະ ນ້ຳມັນເຊື້ອໄຟສຳລັບຮັບສົ່ງພະນັກງານ | 36 | ເດືອນ | | - | |
| - ລົດ 4 ລໍຈຳນວນ1ຄັນພ້ອມຄົນຂັບ ແລະ ນ້ຳມັນເຊື້ອໄຟສຳລັບຂັບຮັບສົ່ງພະນັກງານໜ້າງານ WEP | 36 | ເດືອນ | | - | |
| - ລົດ 4 ລໍຈຳນວນ2ຄັນພ້ອມຄົນຂັບ ແລະ ນ້ຳມັນເຊື້ອໄຟສຳລັບ ກວດກາໃນພື້ນທີ່ 24 ຊົ່ວໂມງ | 36 | ເດືອນ | | - | |
| | | | | - | |
| **4. ເຄື່ອງແບບພະນັກງານ ແລະ ອຸປະກອນຄຸ້ມຄອງຄວາມປອດໄພສ່ວນບຸກຄົນ** | | | | | - Fix Rate ເໝົາຈ່າຍຄົງທີ່ເປັນລາຍເດືອນ<br>- ເຄື່ອງແບບພະນັກງານເຈົ້າໜ້າທີ່ຮັກສາຄວາມປອດໄພ 98 ຄົນ ຕະຫຼອດໄລຍະເວລາປະຕິບັດວຽກ<br>- ອຸປະກອນຄວາມປອດໄພສ່ວນບຸກຄົນສຳລັບເຈົ້າໜ້າທີ່ຮັກສາຄວາມປອດໄພ 98 ຄົນ ຕະຫຼອດໄລຍະເວລາປະຕິບັດວຽກ ເຊັ່ນ ໝວກນິລະໄພ, ເກີບນິລະໄພ, ແວ່ນຕາ, ເສື້ອກັນຝົນ, ໜ້າກາກກັນຝຸ່ນ |
| - ເຄື່ອງແບບພະນັກງານ | 36 | ເດືອນ | | | |
| - ອຸປະກອນຄຸ້ມຄອງຄວາມປອດໄພສ່ວນບຸກຄົນ | 36 | ເດືອນ | | - | |
| | | | | - | |
| | | | | | |
| **ກ. ລວມຄ່າໃຊ້ຈ່າຍ ( 1 + 2 + 3 + 4)** | | | | - | |
| **ຂ. ກຳໄລ** | | | | - | |
| **ຄ. ພາສີກຳໄລ20 % (ຄ. X 20%)** | | | | - | |
| **ງ. ສ່ວນລົດ** | | | | | |
| **ຈ. ລວມຄ່າທີ່ສະເໜີທັງໝົດ** | | | | - | |
| **ຈ. Vat 7% ( ຈ. X 7%)** | | | | - | |
| **ລວມລາຄາທີ່ສະເໜີທັງໝົດ + Vat 7%** | | | | - | |